ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ

ເອກະສານລາຍງານການເງິນກາງປີ

ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດວັນທີ 30 ມິຖຸນາ 2026

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ

ສາລະບານ

	ໜ້າ
ຂໍ້ມູນທົ່ວໄປ	1 – 2
ບົດລາຍງານຂອງຄະນະບໍລິຫານ	3
ບົດລາຍງານການທົບທວນຄືນເອກະສານລາຍງານການເງິນກາງປີ	4 – 5
ໃບລາຍງານຖານະການເງິນກາງປີ	6 – 7
ໃບລາຍງານຜົນການດຳເນີນງານກາງປີ	8
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງກາງປີ	9
ໃບລາຍງານກະແສເງິນສົດກາງປີ	10 – 11
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນກາງປີ	12 – 29

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ

ຂໍ້ມູນທົ່ວໄປ

ບໍລິສັດ

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ ("ບໍລິສັດ") ກ່ອນໜ້ານີ້ແມ່ນບໍລິສັດ ຫຼັກຊັບ ລາວ-ຈີນ ຈຳກັດ ເປັນບໍລິສັດມະຫາຊົນທີ່ດຳເນີນທຸລະກິດພາຍໃຕ້ກົດໝາຍວ່າດ້ວຍ ວິສາຫະກິດແຫ່ງ ສປປ ລາວ ແລະ ໃບທະບຽນວິສາຫະກິດເລກທີ 0631 ອອກໂດຍ ກະຊວງ ແຜນການ ແລະ ການລົງທຶນໃນວັນທີ 21 ມິຖຸນາ 2013 ແລະ ໃບອະນຸຍາດດຳເນີນທຸລະກິດເລກທີ 010 ອອກໂດຍ ຄະນະກຳມະການ ຄຸ້ມຄອງຫຼັກຊັບແຫ່ງ ສປປ ລາວ (ຄຄຊ) ໃນວັນທີ 16 ພະຈິກ 2013 ແລະ ໃບທະບຽນວິສາຫະກິດສະບັບປັບປຸງສະບັບເລກທີ 0010/ ຈຫວ ຂອງບໍລິສັດໄດ້ອອກໃຫ້ໂດຍຄະນະຄຸ້ມຄອງເຂດເສດຖະກິດພິເສດ ໃນວັນທີ 22 ເມສາ 2025 ແລະ ໃບອະນຸຍາດດຳເນີນທຸລະກິດ ສະບັບເລກທີ 06/ຄຄຊ ອອກໂດຍສຳນັກງານຄະນະກຳມະການຫຼັກຊັບລາວ (ຄຄຊ) ໃນວັນທີ 4 ກໍລະກົດ 2025. ໃນວັນທີ 17 ມິນາ 2025, ບໍລິສັດໄດ້ຮັບໃບອະນຸຍາດອອກຈຳໜ່າຍຮຸ້ນ (IPO) ອອກໂດຍສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວ. ຕາມທີ່ບໍລິສັດ ໄດ້ດຳເນີນການອອກຈຳໜ່າຍຮຸ້ນສາມັນໃຫ້ແກ່ມວນຊົນຄັ້ງທຳອິດສຳເລັດໂດຍມີຮຸ້ນຈຳນວນ 111,111,200 ຮຸ້ນ ໃນມູນຄ່າໜ້າບັດ 100 ກີບຕໍ່ຮຸ້ນ ແລະ ລາຄາຂາຍ 130 ກີບ/ຮຸ້ນ ທີ່ໄດ້ອອກຈຳໜ່າຍ. ໃນວັນທີ 24 ກໍລະກົດ 2026, ບໍລິສັດໄດ້ຮັບໃບຢັ້ງຢືນຈົດທະບຽນ ວິສາຫະກິດສະບັບແກ້ໄຂ ເລກທີ 060361/ຄຄຊ ອອກໂດຍ ຄະນະຄຸ້ມຄອງເຂດເສດຖະກິດພິເສດ.

ໃນວັນທີ 30 ມິຖຸນາ 2026, ບໍລິສັດໄດ້ຮັບການສ້າງຕັ້ງຂຶ້ນໂດຍຜູ້ຖືຮຸ້ນ 4 ພາກສ່ວນ: (i) ທະນາຄານສົ່ງເສີມກະສິກຳ, (ii) ບໍລິສັດລາວ ອຸດສາຫະກຳຂໍ້ມູນຂ່າວສານ ຈຳກັດ, ເຊິ່ງສອງບໍລິສັດດັ່ງກ່າວແມ່ນສ້າງຕັ້ງຢູ່ ສປປ ລາວ ແລະ (iii) ບໍລິສັດຫຼັກຊັບ ຮຸ້ນສ່ວນປາຊີຟິກ ຈຳ ກັດ ແມ່ນຖືກສ້າງຕັ້ງຢູ່ສາທາລະນະລັດ ປະຊາຊົນຈີນ, (iv) ນັກລົງທຶນທົ່ວໄປ ໂດຍມີສັດສ່ວນການຖືຮຸ້ນໃນອັດຕາ 36.90%, 18%, 35.10% ແລະ 10% ຕາມລຳດັບ.

ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ທຶນຈົດທະບຽນສ້າງຕັ້ງບໍລິສັດແມ່ນ 111,111,120,000 ກີບ. ນະວັນທີ 31 ທັນວາ 2025 ທຶນ ຈົດທະບຽນຖອກແລ້ວຂອງບໍລິສັດ ແມ່ນ 111,111,120,000 ກີບ.

ກິດຈະກຳຫຼັກຂອງບໍລິສັດ ແມ່ນການບໍລິການທີ່ປຶກສາດ້ານການເງິນ, ທີ່ປຶກສາດ້ານການລົງທຶນ ກ່ຽວກັບຫຼັກຊັບ, ນາຍໜ້າຊື້ ຂາຍຫຼັກ ຊັບ ຕາມການສັ່ງຊື້ ຫຼື ສັ່ງຂາຍຂອງຜູ້ລົງທຶນ, ຕົວແທນຫຼັກຊັບໃນນາມບໍລິສັດຫຼັກຊັບ, ຄ້ຳປະກັນການອອກຈຳໜ່າຍຫຼັກຊັບ ແລະ ບໍລິການ ກອງທຶນສ່ວນບຸກຄົນ.

ສຳນັກງານໃຫຍ່ຂອງບໍລິສັດຕັ້ງຢູ່ ເຂດເສດຖະກິດພິເສດບຶງທາດຫຼວງ, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.

ຂໍ້ມູນທົ່ວໄປ (ຕໍ່)

ສະພາບໍລິຫານ

ສະມາຊິກສະພາບໍລິຫານ ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດວັນທີ 30 ມິຖຸນາ 2026 ແລະ ນະມື້ອອກປົດລາຍງານມີດັ່ງນີ້:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ*
ທ່ານ ໜູໄຊ ພູມສຸວັນ	ສະພາບໍລິຫານ	ແຕ່ງຕັ້ງ ວັນທີ 10 ພຶດສະພາ 2024
ທ່ານ ຫຼີ ຊາງເຫວີຍ	ຮອງສະພາບໍລິຫານ	ແຕ່ງຕັ້ງ ວັນທີ 22 ກັນຍາ 2017
ທ່ານ ໂຈ ຄຸນ	ສະມາຊິກສະພາບໍລິຫານ	ແຕ່ງຕັ້ງ ວັນທີ 05 ພຶດສະພາ 2023
ທ່ານ ຈາງ ຫົງບິນ	ສະມາຊິກສະພາບໍລິຫານ	ແຕ່ງຕັ້ງ ວັນທີ 19 ກໍລະກົດ 2013
ທ່ານ ສົມພິງ ບໍລິບຸດ	ສະມາຊິກສະພາບໍລິຫານ	ແຕ່ງຕັ້ງ ວັນທີ 14 ຕຸລາ 2024
ທ່ານ ລິນ ລີ	ສະມາຊິກສະພາບໍລິຫານທີ່ມີສ່ວນຮ່ວມໃນການບໍລິຫານ	ລາອອກ ວັນທີ 9 ກໍລະກົດ 2026 ແຕ່ງຕັ້ງ ວັນທີ 14 ຕຸລາ 2024
ທ່ານ ຫວາງ ເວີຍ	ສະມາຊິກສະພາບໍລິຫານທີ່ມີສ່ວນຮ່ວມໃນການບໍລິຫານ	ແຕ່ງຕັ້ງ ວັນທີ 9 ກໍລະກົດ 2026
ທ່ານ ຫວາງ ເວີຍ	ສະມາຊິກອິດສະລະ	ລາອອກ ວັນທີ 9 ກໍລະກົດ 2026 ແຕ່ງຕັ້ງ ວັນທີ 19 ກໍລະກົດ 2013
ທ່ານ ຣສ. ປອ. ປິຍະ ວົງພິດ	ສະມາຊິກອິດສະລະ	ລາອອກ ວັນທີ 9 ກໍລະກົດ 2026 ແຕ່ງຕັ້ງ ວັນທີ 23 ພຶດສະພາ 2023
ທ່ານ ຣສ. ປອ. ໄຊພອນ ກອງມະນີລາ	ສະມາຊິກອິດສະລະ	ແຕ່ງຕັ້ງ ວັນທີ 9 ກໍລະກົດ 2026
ທ່ານ ນະ ຈັນຕະລີວົງ	ສະມາຊິກອິດສະລະ	ແຕ່ງຕັ້ງ ວັນທີ 14 ຕຸລາ 2024
ທ່ານ ປອ. ເຈຍ ຮຸຍ	ສະມາຊິກອິດສະລະ	ແຕ່ງຕັ້ງ ວັນທີ 9 ກໍລະກົດ 2026

ຄະນະບໍລິຫານ

ສະມາຊິກຄະນະບໍລິຫານ ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດວັນທີ 30 ມິຖຸນາ 2026 ແລະ ນະມື້ອອກປົດລາຍງານມີດັ່ງນີ້:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ*
ທ່ານ ລິນ ລີ	ຜູ້ອຳນວຍການໃຫຍ່	ລາອອກ ວັນທີ 9 ກໍລະກົດ 2026 ແຕ່ງຕັ້ງ ວັນທີ 19 ກໍລະກົດ 2013
ທ່ານ ຫວາງ ເວີຍ	ຜູ້ອຳນວຍການໃຫຍ່	ແຕ່ງຕັ້ງ ວັນທີ 9 ກໍລະກົດ 2026
ທ່ານ ປອ ສຸດທິເດດ ບຸນລືໄຊ	ຮອງຜູ້ອຳນວຍການໃຫຍ່	ແຕ່ງຕັ້ງ ວັນທີ 25 ກຸມພາ 2020
ທ່ານ ພົງສະຫວັດ ລືນາມ	ຮອງຜູ້ອຳນວຍການໃຫຍ່	ລາອອກ ວັນທີ 12 ມິຖຸນາ 2026 ແຕ່ງຕັ້ງ ວັນທີ 14 ຕຸລາ 2024

ຕົວແທນດ້ານກົດໝາຍ

ຕົວແທນທາງດ້ານກົດໝາຍຂອງບໍລິສັດສຳລັບວັນທີ 1 ມັງກອນ 2026 ຫາ ວັນທີ 9 ກໍລະກົດ 2026 ແມ່ນ ທ່ານ ລິນ ລີ, ຜູ້ອຳນວຍການໃຫຍ່.

ຕົວແທນທາງດ້ານກົດໝາຍຂອງບໍລິສັດສຳລັບວັນທີ 9 ກໍລະກົດ 2026 ຈົນເຖິງນະມື້ອອກປົດລາຍງານສະບັບນີ້ແມ່ນ ທ່ານ ຫວາງ ເວີຍ, ຜູ້ອຳນວຍການໃຫຍ່.

ຜູ້ກວດສອບບັນຊີ

ຜູ້ກວດສອບບັນຊີຂອງບໍລິສັດແມ່ນ ບໍລິສັດ ເອີນແອນຢັ່ງ ລາວ ຈຳກັດ.

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ

ບົດລາຍງານຂອງຄະນະບໍລິຫານ

ຄະນະບໍລິຫານ ຂອງ ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ ("ບໍລິສັດ") ຂໍນຳສະເໜີບົດລາຍງານຂອງຕົນເອງ ແລະ ເອກະສານລາຍງານການເງິນການປີຂອງບໍລິສັດ ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດວັນທີ 30 ມິຖຸນາ 2026.

ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ກັບເອກະສານລາຍງານການເງິນການປີ

ຄະນະບໍລິຫານຂອງບໍລິສັດມີໜ້າທີ່ຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນການປີ ໂດຍສອດຄ່ອງກັບນະໂຍບາຍການບັນຊີ ຕາມທີ່ໄດ້ອະທິບາຍໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນການປີ. ບັນດານະໂຍບາຍການບັນຊີເຫຼົ່ານີ້ແມ່ນບໍ່ໄດ້ມີຈຸດປະສົງທີ່ຈະນຳສະເໜີໃນລາຍງານຖານະການເງິນການປີ, ຜົນການດຳເນີນງານການປີ ແລະ ກະແສເງິນສົດການປີຂອງບໍລິສັດ ໂດຍສອດຄ່ອງກັບຫຼັກການບັນຊີສາກົນທີ່ຍອມຮັບໂດຍທົ່ວໄປ. ໃນຂັ້ນຕອນການກະກຽມບົດລາຍງານການເງິນການປີ, ຄະນະບໍລິຫານຄວບປະຕິບັດດັ່ງນີ້:

- ເລືອກເຟັ້ນເອົານະໂຍບາຍການບັນຊີທີ່ເໝາະສົມ ແລະ ນຳໃຊ້ຢ່າງສະໝ່ຳສະເໝີ;
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ຮອບຄອບ;
- ຖະແຫຼງການວ່າບັນດາມາດຕະຖານບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດ, ທຸກໆການປະຕິບັດທີ່ບໍ່ສອດຄ່ອງກັບມາດຕະຖານການບັນຊີຕ້ອງຖືກນຳມາເປີດເຜີຍ ແລະ ອະທິບາຍໃນເອກະສານລາຍງານການເງິນການປີ; ແລະ
- ກະກຽມເອກະສານລາຍງານການເງິນການປີບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະນີຫາກຕັ້ງຂໍ້ສົມມຸດຖານ ຫຼື ຄາດຄະເນວ່າ ບໍລິສັດ ຈະບໍ່ສາມາດດຳເນີນທຸລະກິດຕໍ່ໄປໄດ້.

ຄະນະບໍລິຫານຂອງບໍລິສັດຕ້ອງຮັບປະກັນວ່າ ບັນດາຂໍ້ມູນທາງການບັນຊີທີ່ໄດ້ບັນທຶກໄວ້ນັ້ນ ໄດ້ເປີດເຜີຍດ້ວຍເຫດຜົນທີ່ຖືກຕ້ອງ ຕະຫຼອດມາ, ຖານະທາງການເງິນການປີຂອງບໍລິສັດ ແລະ ເພື່ອຮັບປະກັນວ່າບົດລາຍງານການເງິນການປີ ແມ່ນສອດຄ່ອງກັບການບັນທຶກລະບົບບັນຊີທີ່ໄດ້ນຳໃຊ້. ບໍລິສັດຍັງຮັບຜິດຊອບຕໍ່ການຮັກສາຊັບສິນຂອງບໍລິສັດ ແລະ ຮັບປະກັນວ່າບໍລິສັດມີການຄົ້ນຫາ ແລະ ປ້ອງກັນກ່ຽວກັບຄວາມບໍ່ໂປ່ງໃສ ແລະ ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະບໍລິຫານໄດ້ຢັ້ງຢືນວ່າ ບໍລິສັດໄດ້ປະຕິບັດຕາມເງື່ອນໄຂຂ້າງເທິງໃນການກະກຽມເອກະສານລາຍງານການເງິນການປີ.

ຄຳຖະແຫຼງການຂອງຄະນະບໍລິຫານ

ຄະນະບໍລິຫານຂອງບໍລິສັດມີຄວາມຍິນດີຖະແຫຼງວ່າ, ໃນຄຳເຫັນຂອງບໍລິສັດ, ເອກະສານລາຍງານການເງິນການປີ ໄດ້ຖືກກະກຽມໂດຍອີງຕາມນະໂຍບາຍການບັນຊີທີ່ໄດ້ລະບຸໄວ້ໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນການປີ.

ລົງຊື່ໂດຍ ຕາງໜ້າຄະນະບໍລິຫານ:

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ Lao-China Securities Public Company

ທ່ານ ຫວາງ ເວີ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

11 ກັນຍາ 2026

Ernst & Young Lao Co., Ltd
6th floor, Kolao Tower I, 23 Singha Road
Nongbone Village, Saysettha District
Vientiane Capital, Lao P.D.R.

Tel: +856 21 455 077
Fax: +856 21 455 078
ey.com

Building a better working world

ເອກະສານອ້າງອີງເລກທີ: 11486915/E-69131003-LR

ບົດລາຍງານການທົບທວນຄືນເອກະສານລາຍງານການເງິນກາງປີ

ຮຽນ: ເຈົ້າຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ

ພວກຂ້າພະເຈົ້າໄດ້ດຳເນີນການທົບທວນຄືນເອກະສານລາຍງານຖານະການເງິນກາງປີຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ ("ບໍລິສັດ") ໃນວັນທີ 30 ມິຖຸນາ 2026 ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນກາງປີ ນະວັນທີ 30 ມິຖຸນາ 2026, ແລະ ໃບລາຍງານຜົນການດຳເນີນງານກາງປີ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງກາງປີ ແລະ ໃບລາຍງານກະແສເງິນສົດກາງປີ ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດວັນທີດັ່ງກ່າວ ແລະ ບົດສະຫຼຸບຂອງນັຍສຳຄັນ ແລະ ບົດອະທິບາຍເລກທີຕ່າງໆ ຕາມທີ່ລະບຸໄວ້ໃນໜ້າທີ 6 ຫາ ໜ້າທີ 29.

ໃນຄວາມຄິດເຫັນຂອງພວກຂ້າພະເຈົ້າ, ຄະນະບໍລິຫານ ຂອງບໍລິສັດ ແມ່ນມີຄວາມຮັບຜິດຊອບໃນການກະກຽມຂໍ້ມູນທາງການໂດຍສອດຄ່ອງກັບນະໂຍບາຍທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍເລກທີ 3 ໃນເອກະສານລາຍງານການເງິນກາງປີ. ຄວາມຮັບຜິດຊອບຂອງພວກຂ້າພະເຈົ້າແມ່ນເພື່ອສະແດງຂໍ້ສະຫຼຸບກ່ຽວກັບຂໍ້ມູນທາງດ້ານການເງິນນີ້ໂດຍອີງໃສ່ການທົບທວນຄືນຂອງພວກເຮົາ.

ຂອບເຂດຂອງການທົບທວນ

ພວກຂ້າພະເຈົ້າໄດ້ດຳເນີນການທົບທວນຄືນ ໂດຍສອດຄ່ອງກັບມາດຕະຖານສາກົນວ່າດ້ວຍການບໍລິການທົບທວນຄືນເລກທີ 2410, "*ການທົບທວນຄືນຂໍ້ມູນທາງການເງິນກາງປີໄດ້ປະຕິບັດໂດຍນັກກວດສອບອິດສະຫຼະຂອງບໍລິສັດ*". ການທົບທວນຄືນຂອງເອກະສານລາຍງານການເງິນກາງປີ ປະກອບດ້ວຍການສອບຖາມປະຕິບັດການເບື້ອງຕົ້ນກັບບຸກຄົນທີ່ຮັບຜິດຊອບກ່ຽວກັບການເງິນ ແລະ ການບັນຊີທີ່ສຳຄັນ, ແລະ ນຳໃຊ້ຂັ້ນຕອນການວິເຄາະ ແລະ ວິທີການທົບທວນຄືນອື່ນໆ. ການທົບທວນຄືນນີ້ມີຂອບເຂດໜ້ອຍກວ່າການດຳເນີນການກວດສອບທີ່ອີງຕາມມາດຕະຖານສາກົນດ້ານການກວດສອບ ແລະ ດ້ວຍເຫດນີ້, ພວກຂ້າພະເຈົ້າບໍ່ສາມາດຮັບປະກັນໄດ້ວ່າຈະພົບເຫັນບັນຫາທີ່ສຳຄັນທັງໝົດຄືກັນກັບການດຳເນີນການກວດສອບ. ດັ່ງນັ້ນ, ພວກຂ້າພະເຈົ້າຈຶ່ງບໍ່ໄດ້ອອກຄຳເຫັນຕໍ່ກັບບັນຫາດັ່ງກ່າວ.

ການສະຫຼຸບ

ອີງຕາມການທົບທວນຄືນຂອງພວກຂ້າພະເຈົ້າ, ພົບວ່າບໍ່ມີສິ່ງໃດທີ່ຈະເປັນຂໍ້ບົ່ງຊີ້ໃຫ້ພວກຂ້າພະເຈົ້າເຊື່ອວ່າ ເອກະສານລາຍງານການເງິນກາງປີຂອງບໍລິສັດ ບໍ່ໄດ້ຖືກກະກຽມຢ່າງຖືກຕ້ອງສອດຄ່ອງຕາມນະໂຍບາຍການບັນຊີ ທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍເລກທີ 3 ໃນເອກະສານລາຍງານການເງິນກາງປີ.

A member firm of Ernst & Young Global Limited

Building a better working world

ບັນຫາທີ່ຄວນເອົາໃຈໃສ

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ຕໍ່ບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນກາງປີ, ທີ່ໄດ້ອະທິບາຍນະໂຍບາຍບັນຊີທີ່ໄດ້ຖືກນຳໃຊ້ໂດຍບໍລິສັດ. ບັນດານະໂຍບາຍການບັນຊີເຫຼົ່ານີ້ ແມ່ນບໍ່ໄດ້ມີຈຸດປະສົງທີ່ຈະນຳສະເໜີເອກະສານລາຍການຖານະທາງການເງິນກາງປີ, ຜົນການດຳເນີນງານກາງປີ ແລະ ກະແສເງິນສົດກາງປີຂອງບໍລິສັດ ໂດຍສອດຄ່ອງກັບຫຼັກການບັນຊີສາກົນທີ່ຍອມຮັບໂດຍທົ່ວໄປ.

ການສະຫຼຸບຂອງພວກຂ້າພະເຈົ້າ ແມ່ນບໍ່ໄດ້ມີເງື່ອນໄຂຕໍ່ກັບບັນຫາດັ່ງກ່າວ.

ໃນນາມ ແລະ ຕາງໜ້າ ບໍລິສັດ ເອີນ ແອນ ຢັ່ງ ລາວ ຈຳກັດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ການ
ບໍລິສັດ
ເອີນແອນຢັ່ງລາວ
ຈຳກັດ
Ernst & Young Lao
Co.,Ltd

ທ່ານ ວັນ ເລ
ຮຸ້ນສ່ວນ

ໃບອະນຸຍາດດຳເນີນການກວດສອບ
ເລກທີ 018/LCPAA APT-29

ນະຄອນຫຼວງວຽງຈັນ, ສປປ ລາວ

11 ກັນຍາ 2026

A member firm of Ernst & Young Global Limited

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ

ໃບລາຍງານຖານະການເງິນກາງປີ
ນະວັນທີ 30 ມິຖຸນາ 2026

ສະກຸນເງິນ: ກີບ

ຊັບສິນ	*ບົດອະທິບາຍ ເລກທີ*	*30 ມິຖຸນາ 2026*	*31 ທັນວາ 2025*
A. ຊັບສິນໝຸນວຽນ		**154,535,869,822**	**120,834,456,650**
I. ເງິນສົດ	***4***	***87,469,076,787***	***58,241,775,838***
1. ເງິນສົດໃນຄັງ		47,721,835	4,110,000
2. ເງິນຝາກຢູ່ທະນາຄານ		51,013,551,782	31,187,797,392
3. ເງິນຝາກລູກຄ້າ		36,407,803,170	27,049,868,446
II. ໜີ້ຕ້ອງຮັບໝຸນວຽນ		***21,665,528,819***	***29,191,094,372***
1. ໜີ້ຕ້ອງຮັບການຄ້າ	5	21,127,441,537	28,706,575,151
2. ໜີ້ຕ້ອງຮັບດອກເບ້ຍ		538,087,282	484,519,221
III. ການລົງທຶນໄລຍະສັ້ນ		***44,105,575,610***	***32,097,964,630***
1. ການລົງທຶນໃນຫຼັກຊັບ	6	39,143,017,610	31,098,657,630
2. ເງິນຝາກມີກຳນົດ	7	4,444,000,000	500,000,000
3. ການລົງທຶນຫຼັກຊັບຖືຄອງໄວ້ຈົນຄົບກຳນົດ	13	518,558,000	499,307,000
IV. ຊັບສິນໝຸນວຽນອື່ນໆ		***1,295,688,606***	***1,303,621,810***
1. ຊັບສິນໝຸນວຽນອື່ນໆ	8	1,295,688,606	1,303,621,810
B. ຊັບສິນບໍ່ໝຸນວຽນ		**89,421,679,842**	**116,721,928,147**
I. ຊັບສິນບັດຄົງທີ		***2,230,399,842***	***2,323,576,947***
1. ຊັບສິນບັດຄົງທີ່ມີຕົວຕົນ	9	2,080,599,788	2,173,352,411
2. ຊັບສິນບັດຄົງທີ່ບໍ່ມີຕົວຕົນ	10	1,318,006	1,742,488
3. ຊັບສິນກຳລັງກໍ່ສ້າງ	11	148,482,048	148,482,048
II. ການລົງທຶນໄລຍະຍາວ		***87,191,280,000***	***114,398,351,200***
1. ເງິນຝາກມີກຳນົດໄລຍະຍາວ	7	8,000,000,000	23,000,000,000
2. ການລົງທຶນຫຼັກຊັບຖືຄອງໄວ້ເພື່ອຂາຍ	12	53,541,018,000	69,615,560,000
3. ການລົງທຶນຫຼັກຊັບຖືຄອງໄວ້ຈົນຄົບກຳນົດ	13	25,650,262,000	21,782,791,200
ລວມຊັບສິນ		**243,957,549,664**	**237,556,384,797**

ສະກຸນເງິນ: ກີບ

ໜີ້ສິນ ແລະ ທຶນເຈົ້າຂອງ	*ບົດອະທິບາຍ ເລກທີ*	*30 ມິຖຸນາ 2026*	*31 ທັນວາ 2025*
A. ໜີ້ສິນ		**96,111,701,768**	**72,654,704,485**
I. ໜີ້ສິນໝຸນວຽນ		***96,111,701,768***	***72,654,704,485***
1. ເງິນກູ້ຢືມໄລຍະສັ້ນ	14	25,583,355,000	26,246,681,488
2. ລາຍຮັບລໍຖ້າສະສາງ	15	8,635,769,765	8,635,769,765
3. ໜີ້ຕ້ອງສົ່ງໃຫ້ແກ່ລູກຄ້າ	16	36,407,803,170	27,049,868,446
4. ໜີ້ຕ້ອງສົ່ງໃຫ້ບໍລິສັດຫຼັກຊັບ	17	19,506,397,816	10,335,366,020
5. ໜີ້ຕ້ອງສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ	23	5,460,000,000	-
6. ໜີ້ຕ້ອງສົ່ງອື່ນໆ		437,060,767	360,884,766
7. ພັນປະໂຫຍດຂອງພະນັກງານ		81,315,250	26,134,000
B. ທຶນເຈົ້າຂອງ		**147,845,847,896**	**164,901,680,312**
I. ທຶນ		***147,845,847,896***	***164,901,680,312***
1. ທຶນຈົດທະບຽນທີ່ຖອກແລ້ວ	18	111,111,120,000	111,111,120,000
2. ສ່ວນເພີ່ມມູນຄ່າຮຸ້ນ	18.2	2,360,038,519	2,360,038,519
3. ກຳໄລສະສົມ		26,213,644,462	29,224,275,516
4. ຄັງສຳຮອງຕາມລະບຽບການ		6,231,720,367	4,837,839,729
5. ຄັງສຳຮອງສ່ວນປ່ຽນແປງຂອງຫຼັກຊັບມີໄວ້ເພື່ອຂາຍ	12	902,253,000	16,341,335,000
6. ຄັງສຳຮອງຂະຫຍາຍທຸລະກິດ		1,027,071,548	1,027,071,548
ລວມໜີ້ສິນ ແລະ ທຶນເຈົ້າຂອງ		**243,957,549,664**	**237,556,384,797**

ກະກຽມໂດຍ:

ທ່ານ ຈັນທະພອນ ຢ່າງຢິງຢີ
ຫົວໜ້າບັນຊີ

ອະນຸມັດໂດຍ:

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ Lao-China Securities Public Company

ທ່ານ ຫວາງ ເວີຍ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

11 ກັນຍາ 2026

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ

ໃບລາຍງານຜົນການດຳເນີນງານການເງິນ
ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດວັນທີ 30 ມິຖຸນາ 2026

ສະກຸນເງິນ: ກີບ

ລາຍການ	*ບົດອະທິບາຍ ເລກທີ*	30 ມິຖຸນາ 2026	30 ມິຖຸນາ 2025
1. ລາຍຮັບ		**20,265,975,294**	**16,280,454,968**
ເຊິ່ງໃນນັ້ນ:			
- ລາຍຮັບຄ່ານາຍໜ້າ ແລະ ຄ່າທຳນຽມ	20	14,205,898,377	7,972,948,392
- ລາຍຮັບດອກເບ້ຍ		1,622,671,530	1,152,069,644
- ລາຍຮັບເງິນປັນຜົນຈາກການລົງທຶນຫຼັກຊັບ		2,699,575,700	1,975,160,320
- ກຳໄລສຸດທິຈາກການຂາຍຫຼັກຊັບລົງທຶນ		719,578,537	4,561,677,250
- ລາຍຮັບອື່ນໆໃນການດຳເນີນງານ		1,018,251,150	618,599,362
2. ລາຍຈ່າຍ		**(6,327,168,910)**	**(381,225,025)**
ເຊິ່ງໃນນັ້ນ:			
- ລາຍຈ່າຍນາຍໜ້າ ແລະ ຄ່າທຳນຽມ	20	(1,180,371,589)	(898,125,179)
- (ກຳໄລ/ຂາດທຶນ) ໃນມູນຄ່ายุติธรรมของการลงทุนหลักทรัพย์ไลยะสั้น		8,041,309,129	4,970,076,200
- ค่าใช้จ่ายบุคลากร		(7,391,974,858)	(2,488,165,149)
- ค่าซื้อขาย และ ค่าเสื่อมมูลค่า	9,10	(179,663,505)	(172,150,853)
- ลายจ่ายดอกเบ้ย		(126,190,500)	(125,194,500)
- ลายจ่ายอื่นๆในการดำเนินงาน	21	(5,490,277,587)	(1,667,665,544)
3. ກຳໄລກ່ອນອາກອນ		**13,938,806,384**	**15,899,229,943**
4. ลายจ่ายอากอนกำไล	22	-	-
5. ກຳໄລສຸດທິຫຼັງອາກອນ		**13,938,806,384**	**15,899,229,943**
ກຳໄລຂັ້ນພື້ນຖານຕໍ່ຮຸ້ນ		**12.54**	**14.31**

ກະກຽມໂດຍ:

ທ່ານ ຈັນທະພອນ ຢ່າງຢິງຢີ
ຫົວໜ້າບັນຊີ

ອະນຸມັດໂດຍ:

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ Lao-China Securities Public Company

ທ່ານ ຫວາງ ເວີ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ
11 ກັນຍາ 2026

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງກາງປີ
ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດວັນທີ 30 ມິຖຸນາ 2026

ສະກຸນເງິນ: ກີບ

	ທຶນຈົດທະບຽນຖອກແລ້ວ	*ສ່ວນເພີ່ມມູນຄ່າຮຸ້ນ*	*ຄັງສຳຮອງຕາມລະບຽບການ*	*ຄັງຂະຫຍາຍທຸລະກິດ*	*ຄັງສຳຮອງສ່ວນປ່ຽນແປງຂອງຫຼັກຊັບມີໄວ້ເພື່ອຂາຍ*	*ກຳໄລ/(ຂາດທຶນ) ສະສົມ*	*ລວມ*
ຍອດຫຼືອະວັນທີ 1 ມັງກອນ 2025	**100,000,000,000**	**-**	**2,107,500,518**	**1,027,071,548**	**11,938,485,000**	**10,206,778,619**	**125,279,835,685**
ກຳໄລສຸດທິສຳລັບ 2025	-	-	-	-	-	15,899,229,943	15,899,229,943
ການຈັດສັນຄັງສຳຮອງຕາມລະບຽບການກຳໄລ	-	-	1,589,922,994	-	-	(1,589,922,994)	-
ມູນຄ່ายุติธรรมของการลงทุนหลักทรัพย์เพื่อขาย	-	-	-	-	(2,079,000)	-	(2,079,000)
ທຶນຈົດທະບຽນທີ່ຖອກແລ້ວພາຍໃນໄລຍະ	11,111,120,000	2,360,038,519	-	-	-	-	13,471,158,519
ຍອດຫຼືອະວັນທີ 30 ມິຖຸນາ 2025	**111,111,120,000**	**2,360,038,519**	**3,697,423,512**	**1,027,071,548**	**11,936,406,000**	**24,516,085,568**	**154,648,145,147**
ຍອດຫຼືອະວັນທີ 1 ມັງກອນ 2026	**111,111,120,000**	**2,360,038,519**	**4,837,839,729**	**1,027,071,548**	**16,341,335,000**	**29,224,275,516**	**164,901,680,312**
ກຳໄລສຸດທິໃນໄລຍະ 2026	-	-	-	-	-	13,938,806,384	13,938,806,384
ຈ່າຍເງິນປັນຜົນ (*)	-	-	-	-	-	(15,555,556,800)	(15,555,556,800)
ຄັງສຳຮອງຕາມລະບຽບການ	-	-	1,393,880,638	-	-	(1,393,880,638)	-
ຮັບໃນມູນຄ่าการลงทุนหลักทรัพย์ถือครองไว้เพื่อขาย	-	-	-	-	(15,439,082,000)	-	(15,439,082,000)
ຍອດຫຼືອະວັນທີ 30 ມິຖຸນາ 2026	**111,111,120,000**	**2,360,038,519**	**6,231,720,367**	**1,027,071,548**	**902,253,000**	**26,213,644,462**	**147,845,847,896**

(*) ການຈ່າຍເງິນປັນຜົນໄດ້ຮັບການອະນຸມັດຈາກສະພາບໍລິຫານ ຕາມບົດບັນທຶກກອງປະຊຸມຄະນະບໍລິຫານ ເລກທີ 105/ບລຈ ລົງວັນທີ 29 ພຶດສະພາ 2026. ເງິນປັນຜົນມີມູນຄ่า 14 ກີບຕໍ່ຫຸ້ນ ໄດ້ຖືກຈ่ายໃຫ້ແก่ผู้ถือหุ้นในวันที่ 12 ສິງຫາ 2026.

ກະກຽມໂດຍ:

ท่าน จันทะพอน ย่างยิงยี
ຫົວໜ້າບັນຊີ

ນະຄອນຫຼວງວຽງຈັນ, ສປປ ລາວ
11 ກັນຍາ 2025

ຮັບຮອງໂດຍ:

ท่าน ทาวา เอีย
ผู้อำนวยการใหญ่

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ

ໃບລາຍງານກະແສເງິນສົດກາງປີ
ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດວັນທີ 30 ມິຖຸນາ 2026

ສະກຸນເງິນ: ກີບ

ລາຍການ	*ບົດອະທິບາຍເລກທີ*	ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດວັນທີ 30 ມິຖຸນາ 2026	ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດວັນທີ 30 ມິຖຸນາ 2025
I. ກິດຈະກຳການດຳເນີນງານ			
ກຳໄລກ່ອນອາກອນ		**13,938,806,384**	***15,899,229,943***
ການດັດແກ້ສຳລັບ:			
ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ	9,10	179,663,505	172,150,853
ລາຍຈ່າຍດອກເບ້ຍ		126,190,500	125,194,500
ເງິນແຮສຳລັບໜີ້ເສຍ		3,149,360,868	-
ປ່ຽນແປງໃນມູນຄ່າຍຸດຕິທຳຈາກການລົງທຶນໃນຫຼັກຊັບ		8,041,309,129	4,970,076,200
ລາຍຮັບດອກເບ້ຍ		(1,622,671,530)	(1,152,069,644)
ເງິນປັນຜົນຈາກການລົງທຶນໃນຫຼັກຊັບ		(2,699,575,700)	(1,975,160,320)
ການດັດແກ້ທຶນໝຸນວຽນ:			
ປ່ຽນແປງສຸດທິຂອງໜີ້ຕ້ອງຮັບ		5,852,920,945	2,176,245,267
ປ່ຽນແປງສຸດທິຂອງການລົງທຶນຫຼັກຊັບ		(16,085,669,109)	(511,987,650)
ປ່ຽນແປງສຸດທິຂອງຊັບສິນໝຸນວຽນອື່ນໆ		(1,415,214,995)	31,933,288
ປ່ຽນແປງສຸດທິຂອງໜີ້ຕ້ອງສົ່ງ		18,605,142,521	4,887,893,773
ປ່ຽນແປງຂອງຜົນປະໂຫຍດພະນັກງານ		55,181,250	(274,427)
ລາຍຮັບດອກເບ້ຍ		1,569,103,470	2,113,474,498
ກະແສເງິນສົດສຸດທິຈາກກິດຈະກຳການດຳເນີນງານ		**29,694,547,238**	**26,736,706,281**
II. ກະແສເງິນສົດຈາກກິດຈະກຳການລົງທຶນ			
ຊື້ຊັບສິນບັດລົງທີ່	9,10	(86,486,400)	(131,888,900)
ລົງທຶນໃນເງິນຝາກໄລຍະຍາວ		(3,944,000,000)	(5,500,000,000)
ຮັບຈາກການໄຖ່ຖອນເງິນຝາກມີກຳນົດໄລຍະຍາວ		15,000,000,000	15,000,000,000
ຮັບຈາກການຂາຍ ຫຼັກຊັບປະເພດມີໄວ້ເພື່ອຂາຍ		635,460,000	(1,671,915,000)
ລົງທຶນໃນຫຼັກຊັບຖືໄວ້ຈົນຄົບກຳນົດ		(3,886,721,800)	480,124,400
ສ່ວນເພີ່ມມູນຄ່າຮຸ້ນ		-	2,360,038,519
ເງິນປັນຜົນຈາກການລົງທຶນໃນຫຼັກຊັບ		2,699,575,700	1,975,160,320
ຊັບສິນບັດກຳລັງກໍ່ສ້າງ		-	(148,482,048)
ກະແສເງິນສົດສຸດທິ(ນຳໃຊ້)/ຈາກກິດຈະກຳການລົງທຶນ		**10,417,827,500**	**12,363,037,291**

ສະກຸນເງິນ: ກີບ

ລາຍການ	*ບົດອະທິບາຍ ເລກທີ*	ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດວັນທີ 30 ມິຖຸນາ 2025	ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດວັນທີ 30 ມິຖຸນາ 2024
III. ກິດຈະກຳທາງການເງິນ			
ການຊຳລະເງິນກູ້ຢືມ		(663,326,488)	(1,694,033)
ລາຍຈ່າຍດອກເບ້ຍ		(126,190,500)	(125,194,500)
ເງິນປັນຜົນຄ້າງຈ່າຍ		(10,095,556,800)	-
ທຶນຈົດທະບຽນທີ່ຖອກແລ້ວ	18	-	11,111,120,000
ກະແສເງິນສົດສຸດທິນຳໃຊ້ໃນກິດຈະກຳທາງການເງິນ		**(10,885,073,788)**	**10,984,231,467**
ເພີ່ມຂຶ້ນສຸດທິຂອງເງິນສົດ		**29,227,300,950**	**50,083,975,039**
ເງິນສົດໃນຕົ້ນປີ		**58,241,775,837**	**5,789,133,108**
ເງິນສົດໃນທ້າຍປີ	4	**87,469,076,787**	**55,873,108,147**

ກະກຽມໂດຍ:

ທ່ານ ຈັນທະພອນ ຢ່າງຢົງຢີ
ຫົວໜ້າບັນຊີ

ອະນຸມັດໂດຍ:

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ Lao-China Securities Public Company

ທ່ານ ຫວາງ ເວີ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

11 ກັນຍາ 2026

1. ຂໍ້ມູນບໍລິສັດ

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ ("ບໍລິສັດ") ກ່ອນໜ້ານີ້ແມ່ນບໍລິສັດ ຫຼັກຊັບ ລາວ-ຈີນ ຈຳກັດ ເປັນບໍລິສັດມະຫາຊົນທີ່ດຳເນີນທຸລະກິດພາຍໃຕ້ກົດໝາຍວ່າດ້ວຍ ວິສາຫະກິດແຫ່ງ ສປປ ລາວ ແລະ ໃບທະບຽນວິສາຫະກິດເລກທີ 0631 ອອກໂດຍ ກະຊວງແຜນການ ແລະ ການລົງທຶນໃນວັນທີ 21 ມິຖຸນາ 2013 ແລະ ໃບອະນຸຍາດດຳເນີນທຸລະກິດເລກທີ 010 ອອກໂດຍ ຄະນະກຳມະການຄຸ້ມຄອງຫຼັກຊັບແຫ່ງ ສປປ ລາວ (ຄຄຊ) ໃນວັນທີ 16 ພະຈິກ 2013 ແລະ ໃບທະບຽນວິສາຫະກິດສະບັບປັບປຸງສະບັບເລກທີ 0010/ຈທວ ຂອງບໍລິສັດໄດ້ອອກໃຫ້ໂດຍຄະນະຄຸ້ມຄອງເຂດເສດຖະກິດພິເສດ ໃນວັນທີ 22 ເມສາ 2025 ແລະ ໃບອະນຸຍາດດຳເນີນທຸລະກິດ ສະບັບເລກທີ 06/ຄຄຊ ອອກໂດຍສຳນັກງານຄະນະກຳມະການຫຼັກຊັບລາວ (ຄຄຊ) ໃນວັນທີ 4 ກໍລະກົດ 2025. ໃນວັນທີ 17 ມິນາ 2025, ບໍລິສັດໄດ້ຮັບໃບອະນຸຍາດອອກຈຳໜ່າຍຮຸ້ນ (IPO) ອອກໂດຍສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວ. ຕາມທີ່ບໍລິສັດໄດ້ດຳເນີນການອອກຈຳໜ່າຍຮຸ້ນສາມັນໃຫ້ແກ່ມວນຊົນຄັ້ງທຳອິດສຳເລັດໂດຍມີຮຸ້ນຈຳນວນ 111,111,200 ຮຸ້ນ ໃນມູນຄ່າໜ້າບັດ 100 ກີບຕໍ່ຮຸ້ນ ແລະ ລາຄາຂາຍ 130 ກີບ/ຮຸ້ນ ທີ່ໄດ້ອອກຈຳໜ່າຍ. ໃນວັນທີ 24 ກໍລະກົດ 2026, ບໍລິສັດໄດ້ຮັບໃບຢັ້ງຢືນຈົດທະບຽນວິສາຫະກິດສະບັບແກ້ໄຂ ເລກທີ 060361/ຄຄຊ ອອກໂດຍ ຄະນະຄຸ້ມຄອງເຂດເສດຖະກິດພິເສດ.

ໃນວັນທີ 30 ມິຖຸນາ 2025, ບໍລິສັດໄດ້ຮັບການສ້າງຕັ້ງຂຶ້ນໂດຍຜູ້ຖືຮຸ້ນ 4 ພາກສ່ວນ: (i) ທະນາຄານສົ່ງເສີມກະສິກຳ, (ii) ບໍລິສັດລາວອຸດສາຫະກຳຂໍ້ມູນຂ່າວສານ ຈຳກັດ, ເຊິ່ງສອງບໍລິສັດດັ່ງກ່າວແມ່ນສ້າງຕັ້ງຢູ່ ສປປ ລາວ ແລະ (iii) ບໍລິສັດຫຼັກຊັບຮຸ້ນສ່ວນປາຊີຟິກ ຈຳກັດ ແມ່ນຖືກສ້າງຕັ້ງຢູ່ສາທາລະນະລັດ ປະຊາຊົນຈີນ, (iv) ນັກລົງທຶນທົ່ວໄປ ໂດຍມີສັດສ່ວນການຖືຮຸ້ນໃນອັດຕາ 36.90%, 18%, 35.10% ແລະ 10% ຕາມລຳດັບ.

ນະວັນທີ 30 ມິຖຸນາ 2026 ທຶນຈົດທະບຽນສ້າງຕັ້ງບໍລິສັດແມ່ນ 111,111,120,000 ກີບ. ນະວັນທີ 31 ທັນວາ 2025 ທຶນຈົດທະບຽນຖອກແລ້ວຂອງບໍລິສັດ ແມ່ນ 111,111,120,000 ກີບ.

ກິດຈະກຳຫຼັກຂອງບໍລິສັດ ແມ່ນການໃຫ້ບໍລິການນາຍໜ້າຊື້-ຂາຍຫຼັກຊັບ, ຄ້າຫຼັກຊັບໃນນາມບໍລິສັດຫຼັກຊັບ, ທີ່ປຶກສາດ້ານການເງິນ, ບໍລິການທີ່ປຶກສາດ້ານການລົງທຶນກ່ຽວກັບຫຼັກຊັບ, ບໍລິການຄ້ຳປະກັນການອອກຈຳໜ່າຍຫຼັກຊັບ ແລະ ບໍລິການກອງທຶນສ່ວນບຸກຄົນ.

ສຳນັກງານໃຫຍ່ຂອງບໍລິສັດຕັ້ງຢູ່ ເຂດເສດຖະກິດພິເສດບຶງທາດຫຼວງ, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.

ພະນັກງານທັງໝົດຂອງບໍລິສັດນະວັນທີ 30 ມິຖຸນາ 2026 ມີ 21 ຄົນ (31 ທັນວາ 2025: 23 ຄົນ).

2. ພື້ນຖານໃນການກະກຽມ

ອີງຕາມກົດໝາຍການບັນຊີສະບັບເລກທີ 46/ສພຊ ລົງວັນທີ 20 ພະຈິກ 2023, ບັນດາຫົວໜ່ວຍທີ່ມີຜົນປະໂຫຍດສາທາລະນະ ລວມທັງບໍລິສັດຫຼ້າຊັບຄວນນຳໃຊ້ມາດຕະຖານການລາຍງານການເງິນສາກົນ ("IFRS") ໃນການກະກຽມເອກະສານລາຍງານການເງິນປະຈຳປີ. ອີງຕາມໜັງສືທາງລັດຖະການ ລົງວັນທີ 27 ເມສາ 2020, ບັນດາຫົວໜ່ວຍທີ່ມີຜົນປະໂຫຍດສາທາລະນະໄດ້ຮັບອະນຸຍາດໃຫ້ເລື່ອນການນຳໃຊ້ມາດຕະຖານການລາຍງານການເງິນສາກົນ ຈົນຮອດວັນທີ 1 ມັງກອນ 2026. ປັດຈຸບັນ, ຄະນະບໍລິຫານກຳລັງກະກຽມແຜນການປະຕິບັດ IFRS ໃຫ້ສອດຄ່ອງກັບເອກະສານແຈ້ງການ.

ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດວັນທີ 30 ມິຖຸນາ 2025, ເອກະສານລາຍງານການເງິນຂອງບໍລິສັດໄດ້ຖືກກະກຽມໂດຍສອດຄ່ອງກັບນະໂຍບາຍການບັນຊີ ຕາມທີ່ໄດ້ລະບຸໄວ້ໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນກາງປີ. ເອກະສານລາຍງານການເງິນກາງປີ ແມ່ນໄດ້ຖືກລາຍງານເປັນສະກຸນເງິນລາວກີບ ("ກີບ") ເຊິ່ງແມ່ນສະກຸນເງິນຫຼັກໃນການເຮັດທຸລະກຳ ແລະ ຊຳລະສະສາງຂອງບໍລິສັດ.

ທີ່ມາພ້ອມກັບໃບລາຍງານຖານະການເງິນ, ໃບລາຍງານຜົນການດຳເນີນງານ, ໃບລາຍງານກະແສເງິນສົດ ແລະ ການນຳໃຊ້ບໍ່ໄດ້ຖືກກຳນົດສຳລັບຜູ້ທີ່ບໍ່ໄດ້ແຈ້ງກ່ຽວກັບຫຼັກການບັນຊີ, ຂັ້ນຕອນ ແລະ ການດຳເນີນງານທີ່ອະທິບາຍຂ້າງລຸ່ມນີ້ ແລະ ນອກຈາກນັ້ນບໍ່ໄດ້ມີຈຸດປະສົງເພື່ອນຳສະເໜີຖານະການເງິນ ແລະ ຜົນປະກອບການ ແລະ ກະແສເງິນສົດຂອງບໍລິສັດໃຫ້ຄ່ອງກັບຫຼັກການບັນຊີສາກົນທີ່ຍອມຮັບໂດຍທົ່ວໄປ.

ເອກະສານລາຍງານການເງິນແມ່ນຖືກກະກຽມເພື່ອໃຫ້ບໍລິສັດປະຕິບັດຕາມຂໍ້ກຳນົດໃນການລາຍງານໃຫ້ຜູ້ຖືຮຸ້ນຂອງບໍລິສັດ. ດ້ວຍເຫດຜົນດັ່ງກ່າວ, ເອກະສານລາຍງານການເງິນສະບັບນີ້ອາດບໍ່ເໝາະສົມແກ່ການນຳໃຊ້ເພື່ອຈຸດປະສົງອື່ນໆ ແລະ ຈະບໍ່ຖືກເປີດເຜີຍແກ່ ຫຼື ນຳໃຊ້ໂດຍພາກສ່ວນອື່ນ.

ປີການບັນຊີ

ປີການບັນຊີຂອງບໍລິສັດ ແມ່ນເລີ່ມແຕ່ວັນທີ 1 ມັງກອນ ແລະ ສິ້ນສຸດໃນວັນທີ 30 ມິຖຸນາ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ

ນະໂຍບາຍການບັນຊີທີ່ບໍລິສັດໄດ້ນຳໃຊ້ໃນການກະກຽມເອກະສານລາຍງານການເງິນກາງປີເທື່ອນີ້ ແມ່ນສອດຄ່ອງກັບການນຳໃຊ້ໃນການກະກຽມເອກະສານລາຍງານການເງິນກາງປີຂອງບໍລິສັດສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດວັນທີ 30 ມິຖຸນາ 2025.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.1. *ເງິນສົດ*

ເງິນສົດປະກອບມີ ເງິນສົດໃນຄັງ ແລະ ເງິນຝາກຢູ່ທະນາຄານ, ລວມທັງເງິນຝາກຂອງລູກຄ້າ.

ເງິນສົດໃນຄັງ ແລະ ເງິນຝາກຢູ່ທະນາຄານ ແມ່ນມີສະພາບຄ່ອງສູງ ແລະ ຖືກນຳໃຊ້ເຂົ້າໃນການຄຸ້ມຄອງຄຳໝັ້ນສັນຍາໄລຍະສັ້ນ.

ເງິນຝາກຂອງລູກຄ້າປະກອບມີ ເງິນຝາກຂອງຜູ້ລົງທຶນໃນທຸລະກຳການຊື້ຂາຍຫຼັກຊັບ. ບໍລິສັດຍັງໄດ້ຮັບຮູ້ມູນຄ່າທີ່ຊຳລະໃຫ້ແກ່ລູກຄ້າເປັນໜີ້ຕ້ອງສົ່ງໃຫ້ແກ່ລູກຄ້າ.

3.2. *ຊັບສິນບັດຄົງທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ*

ຊັບສິນບັດຄົງທີ່ມີຕົວຕົນ ປະກອບດ້ວຍສິ່ງຕິດຕັ້ງ, ການປັບປຸງ ແລະ ການຕົບແຕ່ງ, ເຄື່ອງໃຊ້ຫ້ອງການ ແລະ ເຟີນີເຈີ ແລະ ພາຫະນະ. ຊັບສິນບັດທີ່ບໍ່ມີຕົວຕົນປະກອບດ້ວຍລາຍຈ່າຍກ່ອນການສ້າງຕັ້ງ ແລະ ຊ້ອບແວ. ຊັບສິນບັດຄົງທີ່ທີ່ສະແດງຕາມມູນຄ່າຕົ້ນທຶນຊື້ລົບໃຫ້ຄ່າຫຼ້ຍຫ້ຽນສະສົມ, ຖ້າມີ.

ຕົ້ນທຶນຂອງຊັບສິນປະກອບມີ ລາຄາຊື້ ບວກໃຫ້ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງໂດຍກົງໃນການປ່ຽນສະພາບຂອງຊັບສິນໃຫ້ຢູ່ໃນສະພາບພ້ອມສຳລັບການນຳໃຊ້.

ຄ່າໃຊ້ຈ່າຍທີ່ຕິດພັນກັບການຊື້ເພີ່ມ, ການປັບປຸງ ແລະ ການປ່ຽນສະພາບຊັບສິນເພື່ອນຳໃຊ້ຄືນໃໝ່ ຈະຖືກຮັບຮູ້ເປັນຕົ້ນທຶນ ແລະ ລາຍຈ່າຍສຳລັບການບຳລຸງຮັກສາ ແລະ ສ້ອມແປງຈະຖືກບັນທຶກເຂົ້າໃນໃບລາຍງານຜົນການດຳເນີນງານ, ຖ້າມີ.

ເມື່ອຊັບສິນຖືກຂາຍ ຫຼື ສະສາງອອກ, ມູນຄ່າຕົ້ນທຶນ ແລະ ຄ່າຫຼ້ຍຫ້ຽນສະສົມຈະຖືກຕັດອອກຈາກໃນສະຫຼຸບຊັບສິນບັດຂອງເອກະສານລາຍງານຖານະການເງິນ ແລະ ກຳໄລ ຫຼື ຂາດທຶນຈາກການສະສາງຕ່າງໆຈະຖືກສະແດງໃນໃບລາຍງານຜົນການດຳເນີນງານກາງປີ.

3.3. *ຄ່າຫຼ້ຍຫ້ຽນ ແລະ ຄ່າສື່ອມ*

ຄ່າຫຼ້ຍຫ້ຽນຂອງຊັບສິນບັດຄົງທີ່ ແມ່ນຄິດໄລ່ຕາມວິທີຫັກຄ່າຫຼ້ຍຫ້ຽນແບບສະໝ່ຳສະເໝີ ຕາມອັດຕາທີ່ໄດ້ກຳນົດຕາມອາຍຸການນຳໃຊ້ທີ່ປະເມີນໄວ້ ໂດຍສອດຄ່ອງກັບກົດໝາຍອາກອນລາຍໄດ້ເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019 ຮັບຮອງໂດຍສະພາແຫ່ງຊາດ. ດ້ານລຸ່ມນີ້ແມ່ນອັດຕາປະຈຳປີທີ່ໄດ້ນຳໃຊ້:

ການປັບປຸງ ແລະ ການຕົບແຕ່ງ	10%
ເຄື່ອງໃຊ້ຫ້ອງການ ແລະ ເຟີນີເຈີ	20%
ພາຫະນະ	20%
ຊ້ອບແວ	50%

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.4. ຊັບສິນກຳລັງກໍ່ສ້າງ

ຊັບສິນກຳລັງກໍ່ສ້າງ ໝາຍເຖິງຕົ້ນທຶນໃນການຊື້ຊັບສິນເຂົ້າມາໃໝ່ໂດຍທີ່ຍັງບໍ່ໄດ້ສຳເລັດການຕິດຕັ້ງ ຫຼື ຍັງບໍ່ໄດ້ສຳເລັດການກໍ່ສ້າງ. ຊັບສິນກຳລັງກໍ່ສ້າງຈະຖືກລະນຸໄວ້ເປັນຕົ້ນທຶນ, ເຊິ່ງລວມເຖິງຕົ້ນທຶນທັງໝົດທີ່ຈຳເປັນໃນການກໍ່ສ້າງ, ສ້ອມແປງ, ຕົບແຕ່ງ, ຂະຫຍາຍ ຫຼື ປັບປຸງໂຄງສ້າງດ້ວຍເຕັກໂນໂລຊີ, ລວມມີ ຕົ້ນທຶນການກໍ່ສ້າງ, ຄ່າເຄື່ອງມື ແລະ ອຸປະກອນ, ຄ່າໃຊ້ຈ່າຍການຄຸ້ມຄອງໂຄງການ, ຄ່າທີ່ປຶກສາການກໍ່ສ້າງ, ແລະ ຕົ້ນທຶນການກູ້ຢືມທີ່ເຂົ້າເງື່ອນໄຂໃນການປັນທຶກເປັນຊັບສິນ.

ຊັບສິນກຳລັງກໍ່ສ້າງ ຈະຖືກໂອນເປັນຊັບສິນ ກໍຕໍ່ເມື່ອຊັບສິນເຫຼົ່ານີ້ຕິດຕັ້ງສຳເລັດ ຫຼື ເມື່ອໂຄງການກໍ່ສ້າງສຳເລັດສົມບູນ. ການຄິດໄລ່ຄ່າຫຼຸ້ຍຫ້ຽນ ຈະເລີ່ມຫັກຄ່າຫຼຸ້ຍຫ້ຽນ ນັບຕັ້ງແຕ່ຊັບສິນເຫຼົ່ານີ້ໄດ້ເລີ່ມໃຊ້ງານ.

ຄ່າໃຊ້ຈ່າຍການກໍ່ສ້າງ ຈະຖືກຮັບຮູ້ເປັນຄ່າໃຊ້ຈ່າຍ ເມື່ອຄ່າໃຊ້ຈ່າຍນັ້ນບໍ່ເຂົ້າເງື່ອນໄຂໃນການຮັບຮູ້ເປັນຊັບສິນ.

3.5. ທຸລະກຳເງິນຕາຕ່າງປະເທດ

ບັນດາທຸລະກຳທີ່ເປັນສະກຸນເງິນຕາຕ່າງປະເທດ ເຊິ່ງບໍ່ແມ່ນສະກຸນເງິນທີ່ບໍລິສັດໃຊ້ໃນການລາຍງານ ("ກີບ") ແມ່ນຖືກບັນທຶກໂດຍແປງຄ່າຕາມອັດຕາແລກປ່ຽນນະມື້ທີ່ທຸລະກຳເກີດຂຶ້ນ. ນະທ້າຍປີ, ຊັບສິນ ແລະ ໜີ້ສິນທາງການເງິນທີ່ບັນທຶກເປັນເງິນຕາຕ່າງປະເທດ ແມ່ນຈະຖືກຕີມູນຄ່າຕາມອັດຕາແລກປ່ຽນນະມື້ອອກເອກະສານລາຍງານການເງິນ. ທຸກສ່ວນຜິດຕ່ຽງຈາກອັດຕາແລກປ່ຽນ ແມ່ນຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ.

3.6. ໜີ້ຕ້ອງຮັບທາງການຄ້າ

ໜີ້ຕ້ອງຮັບທາງການຄ້າຈະຖືກບັນທຶກ ນະຕົ້ນທຶນ. ເງິນແຮສຳລັບຄ່າເສື່ອມຂອງໜີ້ຕ້ອງຮັບທາງການຄ້າຈະຖືກສ້າງຂຶ້ນເມື່ອມີຫຼັກຖານຢັ້ງຢືນວ່າ ບໍລິສັດຈະບໍ່ສາມາດເກັບໜີ້ໄດ້ໃນຈຳນວນທີ່ລູກຄ້າເປັນໜີ້ທັງໝົດ. ມູນຄ່າຂອງເງິນແຮ ແມ່ນສ່ວນຕ່າງລະຫວ່າງຍອດຍົກມາ ແລະ ມູນຄ່າໜີ້ຕ້ອງຮັບທາງການຄ້າທີ່ສາມາດເກັບຄືນໄດ້. ມູນຄ່ານີ້ຈະເປັນມູນຄ່າຈາກການຄາດຄະເນທີ່ດີທີ່ສຸດ ຂອງຄະນະບໍລິຫານບໍລິສັດທີ່ຄາດວ່າຈະສາມາດເກັບໜີ້ໄດ້.

3.7. ຫຼັກຊັບຖືຄອງໄວ້ເພື່ອຄ້າ

ຫຼັກຊັບຖືຄອງໄວ້ເພື່ອຄ້າສ່ວນໃຫຍ່ ແມ່ນການລົງທຶນໃນຮຸ້ນຈົດທະບຽນ. ການລົງທຶນໃນຮຸ້ນຈົດທະບຽນທັງໝົດໃນເບື້ອງຕົ້ນ ແມ່ນຖືກຮັບຮູ້ຕາມມູນຄ່າຕົ້ນທຶນ ແລະ ຖືກລາຍງານຕາມລາຄາຕະຫຼາດໃນຕໍ່ມາ. ສ່ວນປ່ຽນແປງຕາມລາຄາຕະຫຼາດ ຂອງຮຸ້ນ ແມ່ນຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານກາງປີ.

3.8. ຫຼັກຊັບຖືຄອງໄວ້ເພື່ອຂາຍ

ການລົງທຶນໃນຫຼັກຊັບຖືຄອງໄວ້ເພື່ອຂາຍປະກອບມີ ຫຼັກຊັບທຶນ ເຊິ່ງບໍ່ໄດ້ຖືກຈັດເປັນປະເພດ ຫຼື ກຳນົດໃຫ້ຖືໄວ້ເພື່ອການຄ້າ.

ຫຼັງຈາກການຕີມູນຄ່າໃນເບື້ອງຕົ້ນ, ການລົງທຶນທາງການເງິນມີໄວ້ເພື່ອຂາຍ ໄດ້ຖືກຕີມູນຄ່າຕາມມູນຄ່າຍຸດຕິທຳ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.8. *ຫຼັກຊັບຖືຄອງໄວ້ເພື່ອຂາຍ (ຕໍ່)*

ກຳໄລ ແລະ ຂາດທຶນທີ່ບໍ່ເກີດຂຶ້ນຈິງ ແມ່ນຖືກຮັບຮູ້ໂດຍກົງໃນປະເພດຂອງທຶນໃນຄັງສຳຮອງຫຼັກຊັບຖືຄອງໄວ້ເພື່ອຂາຍ. ເມື່ອການລົງທຶນດັ່ງກ່າວໝົດກຳນົດ, ກຳໄລ ຫຼື ຂາດທຶນສະສົມກ່ອນໜ້ານີ້ ຈະຖືກຮັບຮູ້ໃນສຳຮອງຫຼັກຊັບຖືຄອງໄວ້ເພື່ອຂາຍ ເຊິ່ງໄດ້ຖືກປັບປ່ຽນໃຫ້ເປັນກຳໄລ ຫຼື ຂາດທຶນສະສົມ. ເງິນປັນຜົນທີ່ໄດ້ຮັບຈາກການລົງທຶນໃນຫຼັກຊັບຖືຄອງໄວ້ເພື່ອຂາຍ ຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານວ່າເປັນ 'ລາຍຮັບເງິນປັນຜົນຈາກການລົງທຶນໃນຫຼັກຊັບ' ເມື່ອໄດ້ມີການກຳນົດສິດໃນການຊຳລະ.

3.9. *ການລົງທຶນຫຼັກຊັບຖືຄອງໄວ້ຈົນຄົບກຳນົດ*

ການລົງທຶນຫຼັກຊັບຖືຄອງໄວ້ຈົນຄົບກຳນົດລວມມີ ກາສານໜີ້ ເຊິ່ງຖືຄອງໃນຮູບແບບທຸລະກິດທີ່ມີວັດຖຸປະສົງໃນການຖືຄອງຊັບສິນ ເພື່ອລວບລວມກະແສເງິນສົດຕາມສັນຍາ.

ກາສານໜີ້ທັ້ງໝົດແມ່ນ ຖືກຕີມູນຄ່າໃນເບື້ອງຕົ້ນດ້ວຍມູນຄ່າຍຸດຕິທຳບວກຕົ້ນທຶນທາງກົງໃນການເຮັດທຸລະກຳທີ່ເພີ່ມຂຶ້ນ, ແລະ ຕໍ່ມາດ້ວຍການຫັກຄ່າເສື່ອມຕົ້ນທຶນ ໂດຍໃຊ້ວິທີດອກເບ້ຍທີ່ແທ້ຈິງ. ດອກເບ້ຍທີ່ໄດ້ຮັບໃນຂະນະທີ່ຖືຄອງການລົງທຶນຈົນຄົບກຳນົດຈະຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບເປັນ "ລາຍຮັບດອກເບ້ຍ" ບົນພື້ນຖານດ້ານຮັບ (ຄຳນຶງເຖິງຜົນຕອບແທນທີ່ແທ້ຈິງຂອງຊັບສິນ) ເວັ້ນເສຍແຕ່ການເກັບລວບລວມແມ່ນມີຄວາມໜ້າສົງໃສ.

3.10. *ການຮັບຮູ້ລາຍຮັບ*

(i) ລາຍຮັບຈາກ ຄ່ານາຍໜ້າ ແລະ ຄ່າທຳນຽມ

(ກ) ລາຍຮັບຈາກການສະໜອງບໍລິການດ້ານນາຍໜ້າ ແມ່ນໄດ້ຖືກຮັບຮູ້ໃນວັນທີ່ມີທຸລະກຳເກີດຂຶ້ນ;

(ຂ) ລາຍຮັບດ້ານການໃຫ້ຄຳປຶກສາ ແລະ ຄຳແນະນຳ ແມ່ນໄດ້ຖືກຮັບຮູ້ເມື່ອທຸລະກຳທີ່ກ່ຽວຂ້ອງໄດ້ເກີດຂຶ້ນ ຫຼື ການບໍລິການ ທີ່ຕິດພັນມີຄວາມຮຽກຮ້ອງຕ້ອງການ;

(ຄ) ຄ່າທຳນຽມການຄ້ຳປະກັນໄດ້ຖືກຮັບຮູ້ເປັນລາຍຮັບເມື່ອໄດ້ແຈ້ງສິດທີ່ຈະໄດ້ຮັບການຊຳລະເງິນ ອີງຕາມເງື່ອນໄຂຂອງຂໍ້ກຳນົດ ແລະ/ຫຼື ການຕົກລົງການຄ້ຳປະກັນ.

(ii) ລາຍຮັບດອກເບ້ຍຈາກເງິນຝາກມີກຳນົດ

ລາຍຮັບດອກເບ້ຍຈາກເງິນຝາກມີກຳນົດ ແມ່ນຖືກຮັບຮູ້ໃນພື້ນຖານດ້ານຮັບ ໂດຍຄຳນຶງເຖິງຜົນຕອບແທນຂອງຊັບສິນ ເວັ້ນເສຍແຕ່ການເກັບລວບລວມ ແມ່ນມີຄວາມໜ້າສົງໃສ.

(iii) ລາຍຮັບເງິນປັນຜົນຈາກການລົງທຶນໃນຫຼັກຊັບ

ລາຍຮັບເງິນປັນຜົນຈາກການລົງທຶນໃນຫຼັກຊັບຖືກຮັບຮູ້ ເມື່ອມີສິດທີ່ຈະໄດ້ຮັບຈາກການຊຳລະຂອງບໍລິສັດເກີດຂຶ້ນ ຍົກເວັ້ນເມື່ອມີຄວາມບໍ່ແນ່ນອນໃນການເກັບຄືນລາຍຮັບທີ່ຖືກຮັບຮູ້ໃນກໍລະນີດັ່ງກ່າວ, ລາຍຮັບເງິນປັນຜົນໄດ້ຖືກຮັບຮູ້ບົນພື້ນຖານເງິນສົດ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.11. *ອາກອນກຳໄລ*

ການຄິດໄລ່ເງິນແຮສຳລັບເສຍອາກອນກຳໄລຂອງປີປັດຈຸບັນ, ແມ່ນອີງຕາມກົດໝາຍສ່ວຍສາອາກອນທີ່ນຳໃຊ້ໃນ ສປປ ລາວ. ບໍລິສັດມີພັນທະຈ່າຍອາກອນໃນອັດຕາ 20% ຂອງກຳໄລກ່ອນອາກອນ ໂດຍອີງຕາມກົດໝາຍວ່າດ້ວຍສ່ວຍສາອາກອນສະບັບປັບປຸງເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019 ເຊິ່ງມີຜົນບັງຄັບໃຊ້ໃນວັນທີ ຫຼື ຫຼັງວັນທີ 1 ມັງກອນ 2020. ການແຈ້ງອາກອນຂອງບໍລິສັດຕ້ອງໄດ້ຮັບການກວດກາໂດຍກົມສ່ວຍສາອາກອນ. ເນື່ອງຈາກກົດໝາຍ ແລະ ກົດລະບຽບທາງດ້ານສ່ວຍສາອາກອນແມ່ນຖືກນຳໃຊ້ກັບລາຍການເຄື່ອນໄຫວຫຼາຍປະເພດ ເຊິ່ງອາດຈະມີການຕີຄວາມໝາຍທີ່ແຕກຕ່າງກັນ, ຈຳນວນເງິນທີ່ໄດ້ສະແດງຢູ່ໃນເອກະສານລາຍງານການເງິນອາດຈະຖືກປ່ຽນແປງຫຼັງຈາກມື້ໄລ່ລຽງຂອງເຈົ້າໜ້າທີ່ສ່ວຍສາອາກອນ.

3.12. *ຄັງສຳຮອງ*

ຄັງສຳຮອງຕາມລະບຽບການ

ອີງຕາມມາດຕາ 154, ກົດໝາຍ ວ່າດ້ວຍວິສາຫະກິດ ລົງວັນທີ 29 ທັນວາ 2022, ບໍລິສັດ ຈຳເປັນຕ້ອງໄດ້ຫັກ 10% ຂອງ ກຳໄລຫຼັງອາກອນໃນແຕ່ລະປີ, ຫຼັງຈາກຫັກຂາດທຶນສະສົມ (ຖ້າມີ) ເຂົ້າໃນຄັງສຳຮອງຕາມລະບຽບການ. ເມື່ອຄັງສຳຮອງນີ້ສະສົມເຖິງ 50% ຂອງທຶນຈົດທະບຽນ, ບໍລິສັດອາດຈະໂຈະການຫັກດັ່ງກ່າວ, ເວັ້ນເສຍແຕ່ໄດ້ລະບຸໄວ້ໃນລະບຽບຂໍ້ບັງຄັບຂອງ ບໍລິສັດ. ຄັງສຳຮອງນີ້ຈະຖືກນຳໃຊ້ເຂົ້າໃນການເກັບຄືນຈາກການຂາດທຶນຂອງບໍລິສັດ, ເວັ້ນເສຍແຕ່ກົດໝາຍສະບັບອື່ນໄດ້ ກຳນົດໄວ້.

ຄັງສຳຮອງຂະຫຍາຍທຸລະກິດ

ຄັງສຳຮອງຂະຫຍາຍທຸລະກິດແມ່ນຖືກສ້າງຂຶ້ນໃນແຕ່ລະປີອີງຕາມການຕັດສິນໃຈຂອງຄະນະບໍລິຫານ.

3.13. *ກຳໄລຂັ້ນພື້ນຖານຕໍ່ຮຸ້ນ*

ກຳໄລຂັ້ນພື້ນຖານຕໍ່ຮຸ້ນ ("EPS") ແມ່ນຄິດໄລ່ເງິນປັນຜົນຂອງກຳໄລພາຍໃນປີຫານໃຫ້ຈຳນວນຜູ້ຖືຮຸ້ນສາມັນຂອງບໍລິສັດ ແມ່ດ້ວຍການເອົາຈຳນວນສະເລ່ຍຈຳນວນຮຸ້ນສາມັນທັງໝົດພາຍໃນປີ.

4. ເງິນສົດ

	30 ມິຖຸນາ 2026	*31 ທັນວາ 2025*
	ກີບ	*ກີບ*
ເງິນສົດ	47,721,835	4,110,000
ເງິນຝາກຢູ່ທະນາຄານ	51,013,551,782	31,187,797,392
- *ເງິນຝາກພາຍໃຕ້ບັນຊີຈຳໜ່າຍຮຸ້ນສາມັນ (**)*	*10,000,873,500*	*14,444,924,500*
- *ເງິນຝາກຢູ່ກະຊວງການເງິນ*	*21,594,354,487*	*3,826,005,721*
- *ເງິນຝາກສຳລັບລາຍຮັບ-ລາຍຈ່າຍພັນຖະບັດລັດຖະບານ ຮ່ວມກັບ 2 ບໍລິສັດຫຼັກຊັບ*	*4,434,187,766*	*212,524,370*
- *ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ*	*1,000,000*	*1,000,000*
- *ເງິນຝາກຂອງບໍລິສັດ*	*14,983,136,029*	*12,703,342,801*
ເງິນຂອງນັກລົງທຶນ (*)	36,407,803,170	27,049,868,446
	87,469,076,787	**58,241,775,838**

(*) ບໍລິສັດໄດ້ຮັບຮູ້ຈຳນວນເງິນດັ່ງກ່າວ ເປັນເງິນຝາກຂອງນັກລົງທຶນສຳລັບການຊື້ຂາຍຫຼັກຊັບໃນບົດອະທິບາຍຊ້ອນທ້າຍ ເລກທີ 16 ຂອງເອກະສານລາຍງານການເງິນກາງປີສຳລັບຈຸດປະສົງພິເສດ.

(**) ອີງຕາມໃບຢັ້ງຢືນການສຳເລັດການສະເໜີຂາຍຫຸ້ນຕໍ່ປະຊາຊົນຄັ້ງທຳອິດທີ່ບໍລິສັດໄດ້ຮັບຈາກ ສຳນັກງານຄະນະ ກຳມະການຫຼັກຊັບລາວ (ຄຄຊ), ບໍລິສັດມີສິດນຳໃຊ້ເງິນທຶນດັ່ງກ່າວເພື່ອການຂະຫຍາຍທຸລະກິດ ແລະ ຈຸດປະສົງອື່ນໆຂອງ ບໍລິສັດ ໂດຍຕ້ອງໄດ້ຮັບການອະນຸມັດຈາກຄະນະອຳນວຍການ. ເງິນທຶນດັ່ງກ່າວໄດ້ຖືກຈັດສັນເພື່ອນຳໃຊ້ດັ່ງນີ້: ຈຳນວນ 10,000,000,000 ກີບ ສຳລັບກິດຈະກຳບໍລິຫານເງິນທຶນ ແລະ ຈຳນວນ 4,444,000,000 ກີບ ສຳລັບການດຳເນີນທຸລະກິດ ທົ່ວໄປຂອງບໍລິສັດ.

5. ໜີ້ຕ້ອງຮັບການຄ້າ

	30 ມິຖຸນາ 2026	*31 ທັນວາ 2025*
	ກີບ	*ກີບ*
ໜີ້ຕ້ອງຮັບຄ່າທີ່ປຶກສາທາງດ້ານການເງິນ	1,023,861,166	806,382,347
ໜີ້ຕ້ອງຮັບຄ່າທຳນຽມຄ້ຳປະກັນ	1,386,012,669	8,624,622,944
ໜີ້ຕ້ອງຮັບຄ່າທຳນຽມການເປັນຕົວແທນ	2,245,612,283	1,347,242,625
ໜີ້ຕ້ອງຮັບຄ່ານາຍໜ້າ	18,198,168,088	17,928,327,235
	22,853,654,206	**28,706,575,151**
ເງິນແຮ		
ເງິນແຮສຳລັບໜີ້ເສຍ	(1,726,212,669)	-
	21,127,441,537	**28,706,575,151**

6. ການລົງທຶນໃນຫຼ້າຊັບ

	30 ມິຖຸນາ 2026	*31 ທັນວາ 2025*
	ກີບ	*ກີບ*
ຫຼ້າຊັບຖືຄອງໄວ້ເພື່ອຄ້າ		
ຕົ້ນທຶນ	34,600,356,578	34,600,356,578
ມູນຄ່າຍຸດຕິທຳທີ່ບໍ່ເກີດຂຶ້ນຈິງສຸດທິ (ກຳໄລ)	4,542,661,032	(3,501,698,948)
ມູນຄ່າຍັງເຫຼືອຕາມບັນຊີສຸດທິ	**39,143,017,610**	**31,098,657,630**

7. ເງິນຝາກມີກຳນົດ

	30 ມິຖຸນາ 2026	*31 ທັນວາ 2025*
	ກີບ	*ກີບ*
ເງິນຝາກມີກຳນົດ		
ເງິນຝາກມີກຳນົດໄລຍະສັ້ນ	4,444,000,000	500,000,000
ເງິນຝາກມີກຳນົດໄລຍະຍາວ	8,000,000,000	23,000,000,000
	12,444,000,000	**23,500,000,000**

ລາຍລະອຽດເງິນຝາກມີກຳນົດຂອງບໍລິສັດນະວັນທີ 30 ມິຖຸນາ 2026 ມີດັ່ງລຸ່ມນີ້:

	ຕົ້ນທຶນ			*ອັດຕາດອກເບ້ຍ*
	ກີບ	*ໄລຍະເວລາ*	*ວັນຄົບກຳນົດ*	*(% ຕໍ່ປີ)*
ທະນາຄານ ຮ່ວມທຸລະກິດ ລາວ - ຫວຽດ ຈຳກັດ	8,000,000,000	24 ເດືອນ	02 ຕຸລາ 2027	9.35
ທະນາຄານ ຮ່ວມທຸລະກິດ ລາວ - ຫວຽດ ຈຳກັດ	4,444,000,000	12 ເດືອນ	06 ມັງກອນ 2027	9.38
	12,444,000,000			

8. ຊັບສິນໝຸນວຽນອື່ນໆ

	30 ມິຖຸນາ 2026	*31 ທັນວາ 2025*
	ກີບ	*ກີບ*
ຈ່າຍລ່ວງໜ້າຄ່າເຊົ່າ	145,415,372	469,434,775
ຈ່າຍລ່ວງໜ້າປະກັນໄພ	15,978,476	110,415,925
ກອງທຶນຮ່ວມເພື່ອຊຳລະທົດແທນຄວາມສ່ຽງຫຼ້າຊັບ	197,972,055	145,569,801
ຈຳນວນເງິນທີ່ສາມາດຮຽກຄືນຈາກພະນັກງານ	1,423,148,199	-
ອື່ນໆ	936,322,703	578,201,309
	2,718,836,805	**1,303,621,810**
ເງິນແຮສຳລັບໜີ້ສິນ		
ຄ່າເຜື່ອການດ້ອຍຄ່າຂອງລູກໜີ້ (*)	(1,423,148,199)	-
	1,295,688,606	**1,303,621,810**

(*) ຄ່າເຜື່ອການດ້ອຍຄ່າຂອງລູກໜີ້ຈຳນວນ 1,423,148,199 ກີບ ກ່ຽວຂ້ອງກັບລູກໜີ້ທີ່ຕ້ອງຮຽກຄືນຈາກພະນັກງານ ຊຶ່ງປັດຈຸບັນຍັງຢູ່ໃນໄລຍະການສືບສວນ. ເນື່ອງຈາກຍັງມີຄວາມບໍ່ແນ່ນອນກ່ຽວກັບການສາມາດຮຽກຄືນໄດ້, ຝ່າຍບໍລິຫານຈຶ່ງໄດ້ບັນທຶກເງິນສຳຮອງຜົນຂາດທຶນຈາກການດ້ອຍຄ່າເຕັມຈຳນວນ ນັບເຖິງວັນທີ 30 ມິຖຸນາ 2026. ປັດຈຸບັນ, ການດຳເນີນການຕິດຕາມເພື່ອຮຽກຄືນເງິນ ແລະ ຂັ້ນຕອນທາງກົດໝາຍທີ່ກ່ຽວຂ້ອງ ຍັງຄົງດຳເນີນຢູ່.

9. ຊັບສິນບັດຄົງທີ່ມີຕົວຕົນ

ການເຄື່ອນໄຫວຂອງຊັບສິນບັດຄົງທີ່ມີຕົວຕົນ ສຳລັບກາງປີທີ່ສິ້ນສຸດວັນທີ 30 ມິຖຸນາ 2026 ມີດັ່ງລຸ່ມນີ້:

	ການປັບປຸງ ແລະ ການຕົບແຕ່ງ	*ເຄື່ອງໃຊ້ຫ້ອງການ ແລະ ເຟີນີເຈີ*	*ພາຫະນະ*	*ລວມ*
	ກີບ	*ກີບ*	*ກີບ*	*ກີບ*
ຕົ້ນທຶນ				
ນະວັນທີ 1 ມັງກອນ 2026	2,617,343,562	2,624,364,143	1,256,389,000	6,498,096,705
ເພີ່ມຂຶ້ນພາຍໃນປີ	-	86,486,400	-	86,486,400
ນະວັນທີ 30 ມິຖຸນາ 2026	2,617,343,562	2,710,850,543	1,256,389,000	6,584,583,105
ຄ່າຫຼ້ຍຫ້ຽນສະສົມ				
ນະວັນທີ 1 ມັງກອນ 2026	588,760,175	2,479,595,119	1,256,389,000	4,324,744,294
ຄ່າຫຼ້ຍຫ້ຽນພາຍໃນປີ	34,392,627	144,846,396	-	179,239,023
ນະວັນທີ 30 ມິຖຸນາ 2026	623,152,802	2,624,441,515	1,256,389,000	4,503,983,317
ມູນຄ່າຍັງເຫຼືອຕາມບັນຊີສຸດທິ				
ນະວັນທີ 1 ມັງກອນ 2026	2,028,583,387	144,769,024	-	2,173,352,411
ນະວັນທີ 30 ມິຖຸນາ 2026	1,994,190,760	86,409,028	-	2,080,599,788

10. ຊັບສິນບັດຖຶງທີ່ບໍ່ມີຕົວຕົນ

	ຊ້ອຍແວ
	ກີບ
ຕົ້ນທຶນ	
ນະວັນທີ 1 ມັງກອນ 2026	392,024,300
ເພີ່ມຂຶ້ນພາຍໃນປີ	-
ສະສາງພາຍໃນປີ	-
ນະວັນທີ 30 ມິຖຸນາ 2026	392,024,300
ຄ່າຫຼຸ້ຍຫ້ຽນສະສົມ	
ນະວັນທີ 1 ມັງກອນ 2026	390,281,812
ຄ່າຫຼຸ້ຍຫ້ຽນພາຍໃນປີ	424,482
ນະວັນທີ 30 ມິຖຸນາ 2026	390,706,294
ມູນຄ່າຍັງເຫຼືອຕາມບັນຊີສຸດທ້າ	
ນະວັນທີ 1 ມັງກອນ 2026	1,742,488
ນະວັນທີ 30 ມິຖຸນາ 2026	1,318,006

11. ຊັບສິນກຳລັງກໍ່ສ້າງ

	30 ມິຖຸນາ 2026	*31 ທັນວາ 2025*
	ກີບ	*ກີບ*
ລະບົບຊື້-ຂາຍຫຼັກຊັບ	148,482,048	148,482,048
ມູນຄ່າຍັງເຫຼືອຕາມບັນຊີສຸດທ້າ	**148,482,048**	**148,482,048**

12. ການລົງທຶນຫຼັກຊັບຖືຄອງໄວ້ເພື່ອຂາຍ

	30 ມິຖຸນາ 2026	*31 ທັນວາ 2025*
	ກີບ	*ກີບ*
ຮຸ້ນອອກໂດຍ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ		
ຕົ້ນທຶນ (*)	52,638,765,000	53,274,225,000
ມູນຄ່າຍຸດຕິທຳທີ່ບໍ່ເກີດຂຶ້ນຈິງສຸດທິກຳໄລ	902,253,000	16,341,335,000
ມູນຄ່າຍັງເຫຼືອຕາມບັນຊີສຸດທິ	**53,541,018,000**	**69,615,560,000**

(*) ມູນຄ່າ 52,638,765,000 ນະວັນທີ 30 ມິຖຸນາ 2026 ປະກອບມີ:

(i) ຈຳນວນຮຸ້ນທີ່ຍັງບໍ່ໄດ້ຂາຍ 24,365,100 ຮຸ້ນທີ່ອອກຈຳໜ່າຍຂອງ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນໂດຍທີ່ ບໍລິສັດຈະຊື້ຮຸ້ນສ່ວນໜຶ່ງອີງຕາມຂໍ້ຕົກລົງການບໍລິການຄ້ຳປະກັນສຳລັບ IPO. ການຊື້ຮຸ້ນນັ້ນແມ່ນໄດ້ຮັບການສະໜັບສະໜຸນທາງການເງິນໂດຍການກູ້ຢືມຈາກ ບໍລິສັດ ພັດທະນາສຸນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດ – ບໍລິສັດແມ່ ຂອງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ *(ບົດອະທິບາຍເລກທີ 14)*. ໃນວັນທີ 30 ມິຖຸນາ 2025, ມູນຄ່າຂອງຮຸ້ນທັງໝົດແມ່ນ 25,583,355,000. ໃນໄລຍະ 6 ເດືອນບໍລິສັດໄດ້ຂາຍຮຸ້ນ 605,200 ຮຸ້ນມູນຄ່າ 728,975,133 ກີບ ຫຼັງຈາກຫັກຄ່າທຳນຽມ. ອີງຕາມສັນຍາເລກທີ 003/ບລຈ ລົງວັນທີ 20 ພຶດສະພາ 2019 ມາດຕາທີ 3 ໃນກໍລະນີໄດ້ຮັບເງິນຈາກການຂາຍຮຸ້ນຫຼັງຈາກ 6 ເດືອນຈະຕ້ອງໂອນເງິນດັ່ງກ່າວໃຫ້ກັບບໍລິສັດ ພັດທະນາສຸນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດ ເວັ້ນເສຍແຕ່ວ່າເງິນຈາການຈຳໜ່າຍຮຸ່ນມີ ມູນຄ່າ 400,000,000 ກີບຂຶ້ນໄປ ບໍລິສັດຈະຕ້ອງໂອນເງິນດັ່ງກ່າວຄືນພາຍໃນ 10 ມື້.

(ii) ຈຳນວນຮຸ້ນ 24,755,100 ຮຸ້ນທີ່ບັນທຶກໃນບັນຊີມູນຄ່າຫຼັກຊັບຖືຄອງໄວ້ເພື່ອຂາຍ.ໃນວັນທີ 30 ມິຖຸນາ 2025, ມູນຄ່າຂອງຮຸ້ນທັງໝົດແມ່ນ 27,055,410,000 ກີບ.

13. ການລົງທຶນຫຼັກຊັບຖືຄອງໄວ້ຈົນຄົບກຳນົດ

	30 ມິຖຸນາ 2026	*31 ທັນວາ 2025*
	ກີບ	*ກີບ*
ການລົງທຶນໄລຍະສັ້ນ		
ພັນທະບັດລັດຖະບານອອກໂດຍກະຊວງການເງິນ	518,558,000	499,307,000
	518,558,000	**499,307,000**
ການລົງທຶນໄລຍະຍາວ		
ພັນທະບັດລັດຖະບານອອກໂດຍກະຊວງການເງິນ	25,650,262,000	21,782,791,200
	25,650,262,000	**21,782,791,200**

13. ການລົງທຶນຫຼັກຊັບຖືຄອງໄວ້ຈົນຄົບກຳນົດ (ຕໍ່)

ລາຍລະອຽດຂອງພັນທະບັດລັດຖະບານອອກໂດຍກະຊວງການເງິນ ນະວັນທີ 30 ມິຖຸນາ 2026 ມີດັ່ງລຸ່ມນີ້:

		ຕົ້ນທຶນ				
	ສະກຸນເງິນ	ສະກຸນເງິນ ເດີມ	ກີບ	ໄລຍະ ເວລາ	ວັນຄົບກຳນົດ	ອັດຕາດອກ ເບ້ຍ(% ຕໍ່ປີ)
ການລົງທຶນໄລຍະສັ້ນ						
LA100122ABB9	USD	23,000	518,558,000	5 ປີ	29 ພະຈິກ 2026	7.00
			518,558,000			
ການລົງທຶນໄລຍະຍາວ						
LA10012239E5	USD	20,000	450,920,000	3 ປີ	5 ກັນຍາ 2027	6.00
LA10012239E5	USD	42,000	946,932,000	3 ປີ	19 ກັນຍາ 2027	6.00
LA10012297E3	USD	180,000	4,058,280,000	3 ປີ	18 ກໍລະກົດ 2027	6.00
LA100112DEB8	THB	4,350,000	2,985,187,500	3 ປີ	21 ພະຈິກ 2027	6.00
LA10011297E4	THB	3,880,000	2,662,650,000	3 ປີ	18 ກໍລະກົດ 2027	6.00
LA10011239E6	THB	2,626,000	1,802,092,500	3 ປີ	5 ກັນຍາ 2027	6.00
LA10012229D8	USD	100,000	2,254,600,000	2 ປີ	25 ພະຈິກ 2027	5.50
LA10012229D8	THB	10,000,000	6,862,500,000	2 ປີ	25 ພະຈິກ 2027	5.50
LA10011281G3	THB	2,000,000	1,372,500,000	2 ປີ	30 ມັງກອນ 2028	5.50
LA10012261G4	USD	100,000	2,254,600,000	2 ປີ	30 ມັງກອນ 2028	5.50
		ລວມ	**25,650,262,000**			

14. ເງິນກູ້ຢືມໄລຍະສັ້ນ

	30 ມິຖຸນາ 2026	*31 ທັນວາ 2025*
	ກີບ	*ກີບ*
ບໍລິສັດ ຜັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງ ຈັນຕອນເໜືອ ຈຳກັດ	25,583,355,000	26,246,681,488
	25,583,355,000	**26,246,681,488**

ການກູ້ຢືມທີ່ມີດອກເບ້ຍແມ່ນ ໃນຮູບແບບສະໜັບສະໜຸນເງິນທຶນໃຫ້ແກ່ການຊື້ຮຸ້ນຕາມທີ່ໄດ້ເປີດເຜີຍໃນບົດອະທິບາຍເລກທີ 12, ໂດຍມີການຊຳລະສະສາງອີງໃສ່ຈຳນວນຮຸ້ນທີ່ໄດ້ຂາຍ. ເງິນປັນຜົນທີ່ໄດ້ຈາກການຖືຄອງຮຸ້ນ ແລະ ກຳໄລ/ຂາດທຶນ ຂອງການຂາຍຮຸ້ນຈະຖືເປັນການຈ່າຍດອກເບ້ຍໃຫ້ແກ່ຜູ້ໃຫ້ກູ້ຢືມ.

15. ລາຍຮັບລໍຖ້າສະສາງ

	30 ມິຖຸນາ 2026	*31 ທັນວາ 2025*
	ກີບ	*ກີບ*
ລາຍຮັບລໍຖ້າສະສາງຈາກການຂາຍຮຸ້ນ (*)	8,635,769,765	8,635,769,765
	8,635,769,765	**8,635,769,765**

(*) ໃນວັນທີ 2 ສິງຫາ 2024, ບໍລິສັດໄດ້ເຊັນສັນຍາກັບບໍລິສັດ Hengshi Chengrui Holding Yunnan Company Limited ສຳລັບການຂາຍຮຸ້ນໃນກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ. ທຸລະກຳດັ່ງກ່າວລວມມີຮຸ້ນ 6,347,700 ຮຸ້ນ, ມູນຄ່າ 8,635,769,765 ກີບ. ເພື່ອປະຕິບັດຕາມຂໍ້ກຳນົດອີງຕາມລະບຽບການທີ່ກຳນົດໄວ້ ແລະ ອຳນວຍຄວາມສະດວກໃຫ້ແກ່ການສຳເລັດການໂອນຮຸ້ນ, ບໍລິສັດ Hengshi Chengrui Holding Yunnan Company Limited ຈຳເປັນຕ້ອງສະໜອງເອກະສານການລົງທຶນຕ່າງປະເທດທີ່ຈຳເປັນພາຍໃນ 2026.

16. ໜີ້ຕ້ອງສົ່ງໃຫ້ແກ່ລູກຄ້າ

	30 ມິຖຸນາ 2026	*31 ທັນວາ 2025*
	ກີບ	*ກີບ*
ບັນຊີຊຳລະສະສາງຂອງລູກຄ້າ - ຄ່ານາຍໜ້າ	36,407,803,170	27,049,868,446
	36,407,803,170	**27,049,868,446**

17. ໜີ້ຕ້ອງສົ່ງໃຫ້ບໍລິສັດໃນເຄືອຫຼັກຊັບ

	31 ມິຖຸນາ 2026	*31 ທັນວາ 2025*
	ກີບ	*ກີບ*
ໜີ້ຕ້ອງສົ່ງຄ່ານາຍໜ້າ	14,735,783,857	5,418,494,985
ໜີ້ຕ້ອງສົ່ງຄ່າທີ່ປຶກສາທາງການເງິນ	4,520,678,606	1,917,434,490
ໜີ້ຕ້ອງສົ່ງຄ່າຄ้ຳປะกันการออกจำหน่ายรุ้น	-	2,786,912,175
ໜີ້ຕ້ອງສົ່ງຄ່າບໍລິການສຳລັບຮັບ-ຈ່າຍຜັນທະບັດລັດຖະບານ ຮ່ວມກັບ 2 ບໍລິສັດຫຼັກຊັບ	249,935,353	212,524,370
	19,506,397,816	**10,335,366,020**

18. ທຶນຈົດທະບຽນທີ່ຖອກແລ້ວ

	30 ມິຖຸນາ 2026		31 ທັນວາ 2025	
ຜູ້ຖືຮຸ້ນ	*% ຄວາມເປັນຂອງເຈົ້າ*	*ກີບ*	*% ຄວາມເປັນຂອງເຈົ້າ*	*ກີບ*
ທະນາຄານ ສິ່ງເສີມກະສິກຳ	36.90%	41,000,000,000	36.90%	41,000,000,000
ບໍລິສັດ ລາວອຸດສາຫະກຳຂໍ້ມູນຂ່າວສານ ຈຳກັດ	18.00%	20,000,000,000	18.00%	20,000,000,000
ບໍລິສັດຫຼັກຊັບ ຮຸ້ນສ່ວນປາຊີຟິກ ຈຳກັດ	35.10%	39,000,000,000	35.10%	39,000,000,000
ຜູ້ລົງທຶນທົ່ວໄປ	10.00%	11,111,120,000	10.00%	11,111,120,000
	100%	**111,111,120,000**	**100%**	**111,111,120,000**

18.1 ຮຸ້ນສາມັນ

	30 ມິຖຸນາ 2026	
	ຈຳນວນຮຸ້ນສາມັນ	*ມູນຄ່າ (ກີບ)*
ຮຸ້ນທີ່ໄດ້ຮັບອະນຸມັດ		
ຮຸ້ນທີ່ໄດ້ອອກ ແລະ ຖອກແລ້ວ		
ຮຸ້ນສາມັນ	1,111,111,200	111,111,120,000
ຍອດເຫຼືອທ້າຍປີ	**1,111,111,200**	**111,111,120,000**

ໃນວັນທີ 17 ມີນາ 2025, ບໍລິສັດໄດ້ຮັບໃບອະນຸຍາດອອກຈຳໜ່າຍຮຸ້ນ (IPO) ອອກໂດຍສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວ. ຕາມທີ່ບໍລິສັດໄດ້ດຳເນີນການອອກຈຳໜ່າຍຮຸ້ນສາມັນໃຫ້ແກ່ມວນຊົນຄັ້ງທຳອິດສຳເລັດໂດຍມີຮຸ້ນຈຳນວນ 11,111,200 ຮຸ້ນ ໃນມູນຄ່າໜ້າບັດ 100 ກີບຕໍ່ຮຸ້ນ ແລະ ລາຄາຂາຍ 130 ກີບ/ຮຸ້ນ ທີ່ໄດ້ອອກຈຳໜ່າຍ.

18.2 ສ່ວນເພີ່ມມູນຄ່າຮຸ້ນ

ສ່ວນເພີ່ມມູນຄ່າຮຸ້ນເກີດຈາກການອອກຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ຈຳນວນ 2,360,038,519 ກີບ, ແມ່ນສ່ວນຕ່າງລະຫວ່າງລາຄາຈຳໜ່າຍ (14,444,456,000 ກີບ) ແລະ ມູນຄ່າໜ້າບັດຂອງຮຸ້ນ (11,111,120,000 ກີບ) ຫຼັງຈາກຫັກຕົ້ນທຶນໃນການອອກຮຸ້ນ (973,297,481 ກີບ).

19. ກຳໄລຂັ້ນພື້ນຖານຕໍ່ຮຸ້ນ

ພື້ນຖານຄິດໄລ່ກຳໄລຕໍ່ຮຸ້ນ ("EPS") ແມ່ນຄິດໄລ່ກຳໄລພາຍໃນປີຫານໃຫ້ຈຳນວນຜູ້ສາມັນຂອງບໍລິສັດ ດ້ວຍການເອົາ ຈຳນວນສະເລ່ຍຈຳນວນ ຮຸ້ນສາມັນທັງໝົດພາຍໃນປີ.

ຕາຕະລາງຕໍ່ໄປນີ້ສະແດງລາຍຮັບ ແລະ ຂໍ້ມູນຂອງຮຸ້ນທີ່ໃຊ້ເຂົ້າໃນການຄິດໄລ່ກຳໄລຕໍ່ຮຸ້ນ:

	ສຳລັບໄລຍະຫົກເດືອນຕົ້ນ ປີທີ່ສິ້ນສຸດວັນທີ 30 ມິຖຸນາ 2026 ກີບ	ສຳລັບໄລຍະຫົກເດືອນຕົ້ນ ປີທີ່ສິ້ນສຸດວັນທີ 30 ມິຖຸນາ 2025 ກີບ
ກຳໄລທີ່ເປັນໃຫ້ສ່ວນຂອງຜູ້ຖືຮຸ້ນສາມັນຂອງບໍລິສັດ	13,938,806,384	15,899,229,943
ຈຳນວນຮຸ້ນສາມັນສະເລ່ຍທັງໝົດ	1,111,111,200	1,111,111,200
ກຳໄລຕໍ່ຮຸ້ນ	12.54	14.31

20. ລາຍຮັບຄ່ານາຍໜ້າ ແລະ ຄ່າທຳນຽມສຸດທິ

	ສຳລັບໄລຍະຫົກເດືອນຕົ້ນ ປີທີ່ສິ້ນສຸດວັນທີ 30 ມິຖຸນາ 2026 ກີບ	ສຳລັບໄລຍະຫົກເດືອນຕົ້ນ ປີທີ່ສິ້ນສຸດວັນທີ 30 ມິຖຸນາ 2025 ກີບ
ລາຍຮັບ		
ຄ່ານາຍໜ້າຊື້-ຂາຍ ຫຼັກຊັບ	783,163,572	27,291,429
ຄ່າທີ່ປຶກສາທາງດ້ານການເງິນ	3,835,132,027	4,831,706,771
ຄ່າທຳນຽມເປັນຕົວແທນການຂາຍ	9,587,602,778	3,113,950,192
	-	-
	14,205,898,377	**7,972,948,392**
ລາຍຈ່າຍ		
ຄ່າທີ່ປຶກສາທາງດ້ານການເງິນ	-	(724,980,000)
ຄ່າທຳນຽມເປັນຕົວແທນການຂາຍຫຼັກຊັບ	(8,862,283)	-
ຄ່າທຳນຽມຜູ້ຈຳໜ່າຍ	(1,171,209,406)	(136,666,339)
ຄ່ານາຍອື່ນໆຈາກການຂາຍຫຼັກຊັບ	(299,900)	(36,478,840)
	(1,180,371,589)	**(898,125,179)**
ລາຍຮັບຄ່ານາຍໜ້າ ແລະ ຄ່າທຳນຽມ, ສຸດທິ	**13,025,526,788**	**7,074,823,213**

21. ລາຍຈ່າຍອື່ນໆໃນການດຳເນີນງານ

	ສຳລັບໄລຍະຫົກເດືອນຕົ້ນ ປີທີ່ສິ້ນສຸດວັນທີ 30 ມິຖຸນາ 2026 *ກີບ*	ສຳລັບໄລຍະຫົກເດືອນຕົ້ນ ປີທີ່ສິ້ນສຸດວັນທີ 30 ມິຖຸນາ 2025 *ກີບ*
ຄ່າເຊົ່າ	471,385,942	400,578,077
ຄ່າໃຊ້ຈ່າຍໃນການເດີນທາງ	506,915,039	360,909,379
ຂາດທຶນອັດຕາແລກປ່ຽນ	337,746,494	142,448,194
ຄ່າໃຊ້ຈ່າຍການປະຊຸມ ແລະ ສຳມະນາ	205,855,500	249,118,000
ບັນຊີເຄື່ອງໃຊ້ຫ້ອງການ	70,116,100	-
ຄ່າໃຊ້ຈ່າຍປະກັນໄພ	94,437,449	99,036,866
ລາຍຈ່າຍສຳລັບການບັນເທີງທາງດ້ານທຸລະກິດ	122,546,898	70,300,780
ຄ່າຊ້ອມແປງ ແລະ ຄ່າບຳລຸງຮັກສາ	79,971,384	-
ການບໍລິການຈາກພາຍນອກ	63,764,947	51,067,825
ຄ່າໃຊ້ຈ່າຍສຳລັບສາທາລະນຸປະໂພກ	59,838,000	38,104,000
ຄ່າໄປສະນີ ແລະ ໂທລະຄົມມະນາຄົມ	34,925,780	20,735,581
ອາກອນ ແລະ ພັນທະອື່ນໆ	4,664,000	3,540,000
ອື່ນໆ	288,749,186	231,826,842
ເງິນແຮສຳລັບຫນີ້ເສຍ	3,149,360,868	-
	5,490,277,587	**1,667,665,544**

22. ອາກອນກຳໄລ

ການຄິດໄລ່ເງິນແຮສຳລັບອາກອນກຳໄລພາຍໃນປີ ແມ່ນອີງຕາມກົດໝາຍວ່າດ້ວຍສ່ວຍສາອາກອນທີ່ນຳໃຊ້ໃນ ສປປ ລາວ. ບໍລິສັດມີພັນທະຕ້ອງເສຍອາກອນກຳໄລໃນອັດຕາ 20% ຂອງກຳໄລກ່ອນຫັກອາກອນ ໂດຍອີງຕາມກົດໝາຍສ່ວຍສາອາກອນສະບັບປັບປຸງໃໝ່ ເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019 ເຊິ່ງມີຜົນສັກສິດນຳໃຊ້ໃນວັນທີ ຫຼື ຫຼັງວັນທີ 1 ມັງກອນ 2020.

ເນື່ອງຈາກບໍລິສັດໄດ້ຍ້າຍສະຖານທີ່ຕັ້ງໄປ ເຂດເສດຖະກິດພິເສດບຶງທາດຫຼວງ, ຈຶ່ງໄດ້ຮັບການຍົກເວັ້ນອາກອນລາຍໄດ້ຈາກການດຳເນີນງານເປັນໄລຍະ 2 ປີ ເລີ່ມຈາກວັນທີອອກໃບຢັ້ງຢືນການຈົດທະບຽນວິສາຫະກິດເລກທີ No. 0010 ລົງວັນທີ 25 ມິຖຸນາ 2024.

ລາຍລະອຽດການຫັກເງິນແຮອາກອນກຳໄລ ("ອກລ") ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດວັນທີ 30 ມິຖຸນາ 2025 ດັ່ງລຸ່ມນີ້:

22. ອາກອນກຳໄລ (ຕໍ່)

	ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດວັນທີ 30 ມິຖຸນາ 2026 ກີບ	ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດວັນທີ 30 ມິຖຸນາ 2025 ກີບ
ກຳໄລກ່ອນອາກອນພາຍໃນປີ	**13,938,806,384**	**15,899,229,943**
ຫັກ:		
ລາຍການທີ່ບໍ່ໃຫ້ຖືເປັນລາຍຮັບ	*(9,620,709,749)*	*(6,912,552,897)*
ລາຍຮັບທີ່ຖືກຍົກເວັ້ນຈາກອາກອນກຳໄລ	*(4,158,350,767)*	*(6,981,886,366)*
ເພີ່ມ:		
ລາຍການທີ່ບໍ່ໃຫ້ຖືເປັນລາຍຈ່າຍ	*4,236,381,083*	*1,664,487,831*
	4,396,126,951	**3,669,278,511**
ອາກອນຍົກຍອດໄປຫັກຕໍ່	-	(1,271,090,653)
ຄາດຄະນອາກອນກຳໄລ/(ຂາດທຶນ)ໃນປີ	**4,396,126,951**	**2,398,187,858**
ຄາດຄະນລາຍຈ່າຍອາກອນກຳໄລພາຍໃນປີໃນອັດຕາ 20% (2026: 20%)	-	-
ອາກອນກຳໄລຕ້ອງມອບໃນຕົ້ນປີ	-	-
ອາກອນກຳໄລໄດ້ຊຳລະພາຍໃນປີ	-	-
ອາກອນກຳໄລທີ່ຕ້ອງມອບທ້າຍປີ	-	-

ການແຈ້ງອາກອນຂອງບໍລິສັດຕ້ອງໄດ້ຮັບການກວດກາໂດຍກົມສ່ວຍສາອາກອນ. ເນື່ອງຈາກກົດໝາຍ ແລະ ກົດລະບຽບທາງດ້ານສ່ວຍສາອາກອນ ແມ່ນຖືກນຳໃຊ້ກັບລາຍການເຄື່ອນໄຫວຫຼາຍປະເພດ ເຊິ່ງອາດຈະມີການຕີຄວາມໝາຍທີ່ແຕກຕ່າງກັນຈຳນວນເງິນທີ່ໄດ້ສະແດງຢູ່ໃນເອກະສານລາຍງານການເງິນກາງປີສຳລັບຈຸດປະສົງພິເສດອາດຈະຖືກປ່ຽນແປງຫຼັງຈາກມື້ໄລ່ລຽງຂອງເຈົ້າໜ້າທີ່ສ່ວຍສາອາກອນ.

23. ບັນດາລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍລະອຽດລາຍການເຄື່ອນໄຫວສຳຄັນກັບພາກສ່ວນທີ່ກ່ຽວຂ້ອງພາຍໃນປີດັ່ງລຸ່ມນີ້:

ພາກສ່ວນກ່ຽວຂ້ອງ	*ສາຍພົວພັນ*	*ລາຍການເຄື່ອນໄຫວ*	*30 ມິຖຸນາ 2026*	*31 ທັນວາ 2025*
ທະນາຄານສິ່ງເສີມກະສິກຳ	ເຈົ້າຂອງ	ເງິນຝາກກະແສລາຍວັນ	10,173,497	7,368,626
	ເຈົ້າຂອງ	ເງິນຝາກປະຢັດ	958,757,913	3,239,720,146
			968,931,410	**3,247,088,772**

23. ບັນດາລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ຍອດຄົງເຫຼືອກັບພາກສ່ວນທີ່ກ່ຽວຂ້ອງ ນະວັນທີ 30 ມິຖຸນາ ມີດັ່ງຕໍ່ໄປນີ້:

ພາກສ່ວນກ່ຽວຂ້ອງ	*ສາຍພົວພັນ*	*ລາຍການເຄື່ອນໄຫວ*	*30 ມິຖຸນາ 2026*	*31 ທັນວາ 2025*
ບໍລິສັດຫຼັກຊັບ ປາຊີຟິກ ຮຸ່ນສ່ວນ ຈຳກັດ	ຜູ້ຖືຮຸ້ນ	ເງິນປັນຜົນຄ້າງຈ່າຍ	5,460,000,000	-
			5,460,000,000	-

24. ເຫດການທີ່ເກີດຂຶ້ນພາຍຫຼັງວັນທີຂອງໃບລາຍງານຖານະການເງິນ

ບໍ່ມີບັນຫາ ຫຼື ເຫດການໃດທີ່ໄດ້ເກີດຂຶ້ນຕັ້ງແຕ່ວັນທີ 30 ມິຖຸນາ 2026 ທີ່ສົ່ງຜົນກະທົບເຮັດໃຫ້ມີການດັດແກ້ ຫຼື ເປີດເຜີຍໃນເອກະສານລາຍງານການເງິນກາງປີສຳລັບຈຸດປະສົງພິເສດຂອງບໍລິສັດ.

ກະກຽມໂດຍ:

ທ່ານ ຈັນທະພອນ ຢ່າງຢິງຢີ
ຫົວໜ້າບັນຊີ

ອະນຸມັດໂດຍ:

ທ່ານ ຫວາງ ເວີຍ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

11 ກັນຍາ 2026